ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

01-08 ພະຈິກ 2025
ປີທີ 14
ສະບັບທີ 1040
ລາຍສັປະດາ

## ກອງປະຊຸມຮ່ວມລະຫວ່າງຄະນະປະຈຳສະພາແຫ່ງຊາດ ກັບ ຄະນະລັດຖະບານ



(ສພຊ)- ວັນທີ 29 ຕຸລາຜ່ານມາ ທີ່ຫ້ອງປະຊຸມວຽງໄຊສະພາແຫ່ງຊາດ ໄດ້ມີກອງປະຊຸມຮ່ວມລະຫວ່າງຄະນະປະຈຳສະພາແຫ່ງກັບຄະນະລັດຖະບານ ໂດຍການເປັນປະທານຮ່ວມຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານຄະນະປະຈຳສະພາແຫ່ງຊາດ ແລະ ທ່ານ

ອ່ານຕໍ່ໜ້າ 8

## ແຕ່ງຕັ້ງຄະນະກຳມະການເລືອກຕັ້ງລະດັບຊາດ ເພື່ອເລືອກຕັ້ງ ສສຊ ຊຸດທີ X ແລະ ສສຂ ຊຸດທີ V



(ສພຊ) - ຕອນສວາຍວັນທີ 28 ຕຸລານີ້, ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ກຳມະການຄະນະກຳມະການເລືອກຕັ້ງລະດັບຊາດ ທັງເປັນຮອງຫົວໜ້າອະນຸກຳມະການໂຄສະນາ, ປຸກລະດົມຂະບວນການ ແລະ ຍ້ອງຍໍ ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນກ່ຽວກັບການແຕ່ງຕັ້ງຄະນະກຳມະການເລືອກຕັ້ງລະດັບຊາດ ແລະ ຜົນສຳເລັດການດຳເນີນກອງປະຊຸມຄັ້ງປະຖົມມະລຶກຂອງຄະນະດັ່ງກ່າວ ເຊິ່ງທ່ານໃຫ້ຮູ້ວ່າ: ທ່ານປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ອອກລັດຖະດຳລັດສະບັບເລກທີ 172/ປປທ, ລົງວັນທີ 24 ຕຸລາ 2025 ວ່າດ້ວຍການແຕ່ງຕັ້ງຄະນະກຳມະການເລືອກຕັ້ງລະດັບຊາດ ເພື່ອ

ອ່ານຕໍ່ໜ້າ 4



ແນວຄິດປະທານ
### ໄກສອນ ພົມວິຫານ
ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ສະມາຊິກສະພາແຫ່ງຊາດ ປະກອບສ່ວນຢ່າງເປັນເຈົ້າການເຂົ້າໃນການສຶກສາອົບຮົມພະນັກງານ, ລັດຖະກອນ ໃຫ້ປະຕິບັດໜ້າທີ່ດ້ວຍຄວາມຕັ້ງໜ້າພະຍາຍາມ, ຊື່ສັດສຸດຈະລິດ, ເຊີດຊູນ້ຳໃຈຮັກຊາດເອກະລາດ, ເປັນເຈົ້າຕົນເອງ ເພິ່ງຕົນເອງ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ຮູ້ລະດົມກຳລັງແຮງສັງລວມເພື່ອສ້າງຄວາມອຸດົມຮັ່ງມີໃຫ້ແກ່ປະເທດຊາດ.

(ບົດໂອ້ລົມຂອງປະທານ ໄກສອນ ພົມວິຫານ ໃນກອງປະຊຸມຈັດຕັ້ງທົ່ວປະເທດ ຄັ້ງທີ 7)

ສານ ແມ່ນອົງການປົກປ້ອງລັດຖະທຳມະນູນ ແລະ ກົດໝາຍ, ເຄື່ອນໄຫວເປັນເອກະລາດ ໃນການດຳເນີນຄະດີຕ່າງໆ. ພັກນຳພາສານ ແມ່ນນຳພາທາງດ້ານແນວທາງ, ທັດສະນະ, ການຈັດຕັ້ງ, ກໍ່ສ້າງພະນັກງານ.

(ນິພົນເລືອກເຟັ້ນ ເຫຼັ້ມ 3 ໜ້າ 489)

ອ່ານຕໍ່ສະບັບໜ້າ

## ຄປຈສພຊ ປະຊຸມຮ່ວມກັບ ອົງການກວດກາ ແລະ ອົງການກວດສອບ



ອ່ານຕໍ່ໜ້າ 7

## ສະພາແຫ່ງຊາດ ໄວ້ອາໄລເຖິງດວງວິນຍານຂອງ ສົມເດັດພຣະນາງເຈົ້າສິຣິກິດ ພຣະບໍລົມຊິນີນາດ ພຣະບໍລົມຣາຊະຊົນນະນີພັນປີຫຼວງ



(ສພຊ)-ເພື່ອເປັນການສະແດງຄວາມເຄົາລົບ,ການເສົ້າໂສກເສຍໃຈ ແລະ ຮ່ວມແບ່ງເບົາຄວາມທຸກໂສກຂອງລັດຖະບານ, ປະຊາຊົນ ຕະຫຼອດຮອດພຣະວົງນະຍາດ ຂອງສົມເດັດພຣະຣາຊິນີທຸກຖ້ວນໜ້າ,ຕອນສວາຍວັນທີ 29 ຕຸລາຜ່ານມາ ທີ່ສະຖານເອກອັກຄະລັດຊະທູດແຫ່ງ ລາຊະອານາຈັກໄທ ປະຈຳ ສປປລາວ, ການນຳຂັ້ນສູງຂອງສະພາແຫ່ງຊາດລາວ ນຳໂດຍທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ ໄດ້ເຂົ້າຮ່ວມໄວ້ອາໄລເຖິງດວງວິນຍານຂອງສົມເດັດພຣະນາງເຈົ້າສິຣິກິດ ພຣະບໍລົມຊິນີນາດ ພຣະບໍລົມຣາຊະຊົນນະນີພັນປີຫຼວງ.

ທ່ານ ຄຳໃບ ດຳລັດ ໄດ້ຂຽນແລະເຊັນຄຳໄວ້ອາໄລເຖິງດວງວິນຍານຂອງສົມເດັດພຣະນາງເຈົ້າສິຣິກິດ ພຣະບໍລົມຊິນີນາດ ພຣະບໍລົມຣາຊະຊົນນະນີພັນປີຫຼວງ ເຊິ່ງມີເນື້ອໃນວ່າ: ໃນນາມສະພາແຫ່ງຊາດ ແຫ່ງ ສປປລາວ ແລະ ໃນນາມສ່ວນຕົວ, ພວກຂ້າພະເຈົ້າ ຮູ້ສຶກເສົ້າໂສກເສຍໃຈເປັນຢ່າງຍິ່ງ ແລະ ອາໄລອາວອນຢ່າງສຸດຊຶ້ງ ເມື່ອໄດ້ຮັບຂ່າວການຈາກໄປຢ່າງບໍ່ມີວັນຫວນຄືນກັບມາຂອງສົມ

ອ່ານຕໍ່ໜ້າ 7

## ກປຊສ ປະຊຸມຄົບຄະນະປະຈຳປີ



(ສພຊ) - ກອງປະຊຸມຄົບຄະນະກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ກປຊສ) ປະຈຳປີ 2025 ໄດ້ຈັດເມື່ອວັນທີ 27 ຕຸລາຜ່ານມາ ທີ່ສະພາແຫ່ງຊາດ (ສພຊ) ໂດຍການເປັນປະທານຂອງທ່ານ ພົຕ. ປອ. ວົງສັກ ພັນທະວົງ ກຳມະການຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ມີທ່ານ ພົທ. ສຸວອນ ເລືອງບຸນມີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ບັນດາປະທານ-ຮອງປະທານກຳມາທິການ ສພຊ, ສະມາຊິກສະພາແຫ່ງຊາດທີ່ເປັນກຳມະການສັງ

ອ່ານຕໍ່ໜ້າ 8



ໝາກກ້ວຍ... (ໜ້າ 10)




ສະພາສິງກະໂປ... (ໜ້າ 11)

ວິເສດ ສະແຫວງສຶກສາ

ເພື່ອສິດ ແລະ ຜົນປະໂຫຍດ... (ໜ້າ 12)

# ກອງປະຊຸມຮ່ວມລະຫວ່າງຄະນະປະຈຳສະພາແຫ່ງຊາດ ກັບສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ



(ສພຊ) - ກອງປະຊຸມຮ່ວມລະຫວ່າງຄະນະປະຈຳສະພາແຫ່ງຊາດກັບສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວແລະອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ໄດ້ດຳເນີນໃນຕອນເຊົ້າວັນທີ 30 ຕຸລາຜ່ານມາທີ່ສະພາແຫ່ງຊາດໂດຍການເປັນປະທານຂອງທ່ານປອ.ນາງສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານຄະນະປະຈຳສະພາແຫ່ງຊາດ,ເຂົ້າຮ່ວມມີບັນດາທ່ານຮອງປະທານແລະກຳມະການຄະນະປະຈຳສະພາແຫ່ງຊາດ, ຮອງປະທານສູນກາງແນວລາວສ້າງຊາດ, ຮອງປະທານສູນກາງສະຫະພັນກຳມະບານລາວ, ຮອງປະທານສູນກາງສະຫະພັນແມ່ຍິງລາວ, ຮອງເລຂາຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ,ຕາງໜ້າສະຫະພັນນັກຮົບເກົ່າລາວແລະແຂກຖືກເຊີນ.

ທ່ານປອ.ນາງສູນທອນ ໄຊຍະຈັກ ກ່າວວ່າ: ກອງປະຊຸມຮ່ວມໃນຄັ້ງນີ້ ແມ່ນເພື່ອຈັດຕັ້ງຜັນຂະຫຍາຍເນື້ອໃນຈິດໃຈມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ເນື້ອໃນມາດຕາ 7 ຂອງລັດຖະທຳມະນູນ ແລະ ກົດໝາຍກ່ຽວຂ້ອງ ທີ່ໄດ້ກຳນົດການຕິດຕາມກວດກາຂອງສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ ແລະ ອົງການຈັດຕັ້ງມະຫາຊົນ ຕໍ່ການເຄື່ອນໄຫວຂອງສະພາແຫ່ງຊາດພ້ອມທັງສ່ອງແສງຄຳຄິດຄຳເຫັນຂອງສັງຄົມກໍຄືຄວາມຂັດຂ້ອງໝອງໃຈ, ຄວາມມຸ່ງມາດປາຖະໜາຂອງປະຊາຊົນບັນດາເຜົ່າ ມາຍັງສະພາແຫ່ງຊາດ ເພື່ອຕິດຕາມ, ຊຸກຍູ້ພາກສ່ວນກ່ຽວຂ້ອງ ຈັດຕັ້ງປະຕິບັດໃຫ້ສອດຄ່ອງກັບລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຢ່າງເຂັ້ມງວດ ເຊິ່ງເປັນການຍົກສູງບົດບາດການຕິດຕາມກວດກາຂອງສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວແລະອົງການຈັດຕັ້ງມະຫາຊົນຂັ້ນສູນກາງ; ສ້າງຄວາມເປັນເອກະພາບໃນການແກ້ໄຂບັນຫາຕ່າງໆໃຫ້ສອດຄ່ອງກັບແນວທາງນະໂຍບາຍ, ລັດຖະທຳມະນູນ ແລະ ກົດໝາຍ ລວມທັງການປະສານງານໃຫ້ມີຄວາມໂລ່ງລ່ຽນແລະມີປະສິດທິພາບ.

ຜູ້ເຂົ້າຮ່ວມກອງປະຊຸມໄດ້ເຊີດຊູຄວາມຮັບຜິດຊອບໃນການຄົ້ນຄວ້າ, ປຶກສາຫາລືແລະປະກອບຄຳຄິດເຫັນຢ່າງກົງໄປກົງມາ, ສ້າງສັນ, ຍົກໃຫ້ເຫັນບົດຮຽນຕົວຈິງ ໃນການຕີລາຄາການຈັດຕັ້ງປະຕິບັດກົນໄກການປະສານງານລະ ຫວ່າງຄະນະປະຈຳສະພາແຫ່ງຊາດ (ກຳມາທິການບັນດາເຜົ່າ) ກັບ ສູນກາງແນວລາວສ້າງຊາດ ແລະ 3 ອົງການຈັດຕັ້ງມະຫາຊົນຂັ້ນສູນກາງເພື່ອແກ້ໄຂວຽກຄົງຄ້າງໃຫ້ມີສຳເລັດຕາມຄາດໝາຍ ແລະ ສາມາດນຳໄປຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ.

**(ນາງ ອາລິນ ສຸພົມມະປະດິດ)**

# ສ້າງຄວາມຮັບຮູ້ພາລະບົດບາດຂອງ ສພຊ ແລະ ສພຂ



(ສພຂ) - ວັນທີ 31 ຕຸລາ - 1 ພະຈິກນີ້ ທີ່ສະພາປະຊາຊົນແຂວງ (ສພຂ) ບໍລິຄຳໄຊ ໄດ້ເປີດກອງປະຊຸມເຝິກອົບຮົມເພື່ອຄວາມຮັບຮູ້ ແລະ ເຂົ້າໃຈຕໍ່ພາລະບົດບາດຂອງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ແລະ ວຽກງານໂຄງປະກອບກົງຈັກການຈັດຕັ້ງ ແລະ ບຸກຄະລາກອນຂອງສະພາປະຊາຊົນຂັ້ນແຂວງ ແລະ ວຽກງານກະກຽມດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີV ໂດຍການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ມີທ່ານ ປອ. ສອນທະນູ ທຳມະວົງ ກຳມະການສູນກາງພັກ, ເລຂາພັກແຂວງ, ເຈົ້າແຂວງບໍລິຄຳໄຊ,ທ່ານນາງອຳໄພວອນລ້ອມບຸນແພງກຳມະການສຳຮອງສູນກາງພັກ, ເລຂາທິການສະພາແຫ່ງຊາດ,ບັນດາທ່ານຄະນະປະຈຳສພຂ,ຫົວໜ້າ-ຮອງຫົວໜ້າພະແນກການ ແລະ ອົງການລັດທຽບເທົ່າພະແນກຂັ້ນແຂວງ, ເລຂາພັກເມືອງ ແລະ ປະທານຄະນະກຳມະການປົກຄອງເມືອງ 7 ເມືອງ ພ້ອມດ້ວຍຄະນະຮັບຜິດຊອບກອງປະຊຸມເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານ ປອ. ພູທອນ ວໍລະເພັດ ຮອງປະທານກຳມາທິການກົດໝາຍ ໄດ້ເຜີຍແຜ່ເອກະສານກ່ຽວກັບພາລະບົດບາດ, ສິດແລະໜ້າທີ່ຂອງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ແລະ ບົດຮຽນກ່ຽວກັບການຄົ້ນຄວ້າໂຄງປະກອບກົງຈັກການຈັດຕັ້ງ, ບຸກຄະລາກອນຂອງ ສພຂ; ການກະກຽມແລະດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ແນໃສ່ສ້າງຄວາມຮັບຮູ້, ເຂົ້າໃຈຕໍ່ວຽກງານດັ່ງກ່າວ ໃຫ້ມີຄວາມເລິກເຊິ່ງ ທັງເປັນການຊຸກຍູ້,ແນະນຳແລະສ້າງຄວາມເປັນເອກະພາບ ກ່ຽວກັບໂຄງປະກອບກົງຈັກການຈັດຕັ້ງ ແລະ ບຸກຄະລາກອນຂອງ ສພຂ ທັງເປັນຂໍ້ມູນ, ບ່ອນອີງໃຫ້ແກ່ການຄົ້ນຄວ້າ, ປັບປຸງກົງຈັກການຈັດຕັ້ງຂອງສະພາໃນຊຸດຕໍ່ໄປ ໃຫ້ເປັນລະບົບ, ມີຄວາມເປັນເອກະພາບ ແລະ ສອດຄ່ອງກັບກົດໝາຍວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງເພື່ອຮັບປະກັນໃຫ້ແກ່ການເສີມຂະຫຍາຍ ແລະ ການຍົກສູງບົດບາດການນຳພາຂອງພັກເວົ້າລວມ ໂດຍສະເພາະການຍົກສູງບົດບາດຂອງສະພາ ໃຫ້ມີຄວາມເຂັ້ມແຂງ, ເລິກເຊິ່ງ, ຮອບດ້ານ ສົມຄູ່ກັບການເປັນອົງການຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ.

ຈາກນັ້ນ, ຜູ້ແທນກອງປະຊຸມໄດ້ມີການສົນທະນາແລກປ່ຽນຄຳຄິດຄຳເຫັນຕໍ່ວຽກງານດັ່ງກ່າວຮ່ວມກັນ ໂດຍສະເພາະດ້ານກົນໄກການປະສານງານລະຫວ່າງສະພາປະຊາຊົນຂັ້ນແຂວງກັບ ອົງການປົກຄອງແຂວງ, ບາດກ້າວຂັ້ນຕອນການຈັດຕັ້ງປະຕິບັດພາລະບົດບາດຂອງສະມາຊິກສະພາປະຊາຊົນຂັ້ນແຂວງປະຈຳເຂດເລືອກຕັ້ງເມືອງ,ດ້ານໂຄງປະກອບບຸກຄະລາກອນ ແລະ ອື່ນໆ.

**(ຂ່າວ: ໂສລະຢ້າ, ພາບ: ລະອອງດາວ)**

# ຄະນະຜູ້ແທນສະພາແຫ່ງຊາດ ສຳເລັດການເຂົ້າຮ່ວມກອງປະຊຸມເວທີສົນທະນາສາມຝ່າຍ ຄັ້ງທີ 2

(ສພຊ) - ວັນທີ 1 ພະຈິກຜ່ານມາ, ຄະນະຜູ້ແທນສະພາແຫ່ງຊາດ ນຳໂດຍທ່ານ ປອ. ໄຊບັນດິດ ຣາຊະພົນ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 15 ແຂວງຈຳປາສັກ, ກຳມະການກຳມາທິການແຜນການ, ການເງິນ ແລະ ການກວດສອບ ໄດ້ເຂົ້າຮ່ວມກອງປະຊຸມເວທີສົນທະນາສາມຝ່າຍ ຄັ້ງທີ 2 ລະຫວ່າງສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA), ລັດຖະສະພາແຫ່ງປະເທດມາເລເຊຍ ແລະ ສະຖາບັນຄົ້ນຄວ້າເສດຖະກິດອາຊຽນ-ອາຊີຕາເວັນອອກ (ERIA) ເຊິ່ງຈັດຂຶ້ນທີ່ນະຄອນຫຼວງກົວລາລຳເປີ, ປະເທດມາເລເຊຍ ໂດຍມີຄະນະຜູ້ແທນເຂົ້າຮ່ວມຫຼາຍກວ່າ150ຄົນແລະອີກ1,000ຄົນເຂົ້າຮ່ວມຜ່ານທາງອອນລາຍເປັນຕົ້ນແມ່ນບັນດາປະເທດທີ່ເປັນສະມາຊິກໄອປາ, ປະເທດຜູ້ສັງເກດການຂອງໄອປາ,ຜູ້ນຳຈາກຫົວໜ່ວຍທຸລະກິດພາກເອກະຊົນ, ຜູ້ຊ່ຽວຊານດ້ານພະລັງງານ ແລະ ອົງການຈັດຕັ້ງສາກົນ.




ກອງປະຊຸມໄດ້ດຳເນີນພາຍໃຕ້ຫົວຂໍ້ "ການເຊື່ອມຕໍ່ຊ່ອງວ່າງ: ເພື່ອຮັບປະກັນຄວາມອາດສາມາດບົ່ມຊ້ອນ, ຄວາມໜ້າເຊື່ອຖື ແລະ ຄວາມຍືນຍົງໃນພະລັງງານທົດແທນ (Bridging the Gap: Ensuring Affordability, Reliability and Sustainability I Renewable Energy)" ເຊິ່ງໄດ້ແບ່ງການສົນທະນາອອກເປັນ 4ຫົວຂໍ້ຍ່ອຍຄື: ຄວາມປອດໄພດ້ານພະລັງງານໃນໂລກທີ່ບໍ່ແນ່ນອນ: "ການຫຼຸດຜ່ອນການເພິ່ງພາອາໄສໃນຊ່ວງເວລາທີ່ມີຄວາມເຄັ່ງຕຶງທາງດ້ານພູມສາດການເມືອງ", ທິດທາງດ້ານດິນຟ້າອາກາດ: "ເຮັດໃຫ້ຄວາມພະຍາຍາມສູ່ການປ່ອຍມົນລະພິດເປັນສູນເກີດໄວຂຶ້ນ", ຄວາມຄືບໜ້າຂອງພະລັງງານ: "ການລົງທຶນ, ນະໂຍບາຍ ແລະ ລະບຽບການສ້າງພະລັງງານໃນອະນາຄົດ" ແລະ ການຟື້ນຟູ ແລະ ປັບປຸງໃໝ່: "ເຕັກໂນໂລຊີສ້າງພະລັງງານໃຫ້ພວກເຮົາໃນອະນາຄົດ".

ກອງປະຊຸມຄັ້ງນີ້, ທ່ານ ປອ. ໄຊບັນດິດ ຣາຊະພົນ ຫົວໜ້າຄະນະຜູ້ແທນລາວ ໄດ້ຂຶ້ນກ່າວໃນເວທີສົນທະນາພາຍໃຕ້ຫົວຂໍ້ຍ່ອຍ "ທິດທາງດ້ານດິນຟ້າອາກາດ: "ເຮັດໃຫ້ຄວາມພະຍາຍາມສູ່ການປ່ອຍມົນລະພິດເປັນສູນເກີດໄວຂຶ້ນ", ເຊິ່ງທ່ານໄດ້ຍົກໃຫ້ເຫັນເຖິງແຜນງານແຫ່ງຊາດກ່ຽວກັບການປະກອບສ່ວນແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດຂອງ ສປປ ລາວ ທີ່ສະທ້ອນໃຫ້ເຫັນເຖິງການປະກອບສ່ວນຕໍ່ການປ່ອຍທາດອາຍເຮືອນແກ້ວໃຫ້ເປັນສູນ ໃນປີ 2050 ແລະ ຍັງຍົກໃຫ້ເຫັນຂໍ້ສະດວກ ແລະ ສິ່ງທ້າທ້າຍຕ່າງໆຂອງປະເທດ ໃນການທີ່ຈະບັນລຸເປົ້າໝາຍດັ່ງກ່າວ; ນອກຈາກນັ້ນ, ຍັງໄດ້ກ່າວເຖິງ APG ຫຼື ຕາຂ່າຍໄຟຟ້າອາຊຽນ ເຊິ່ງແມ່ນໂຄງການລິເລີ່ມໃນພາກພື້ນ ເພື່ອເຊື່ອມຕໍ່ຕາຂ່າຍໄຟຟ້າແຫ່ງຊາດຂອງບັນດາປະເທດໃນອາຊີຕາເວັນອອກສຽງໃຕ້ເພື່ອເພີ່ມຄວາມໝັ້ນຄົງດ້ານພະລັງງານ,ຕອບສະໜອງຄວາມຕ້ອງການທີ່ເພີ່ມຂຶ້ນ ແລະ ເຊື່ອມໂຍງພະລັງງານທົດແທນ.

ການເຂົ້າຮ່ວມກອງປະຊຸມຄັ້ງນີ້ ເປັນການປະກອບສ່ວນສຳຄັນລວມທັງການແລກປ່ຽນທັດສະນະກັບບັນດາຜູ້ແທນລັດຖະສະພາເພື່ອນມິດໃນພາກພື້ນອາຊຽນກ່ຽວກັບການຈັດຕັ້ງປະຕິບັດທີ່ດີທີ່ສຸດຕໍ່ກັບນະໂຍບາຍທີ່ປະສົບຜົນສຳເລັດ ແລະ ເຕັກໂນໂລຊີທີ່ພົ້ນເດັ່ນເພື່ອເສີມຂະຫຍາຍປະສິດທິພາບດ້ານພະລັງງານ ແລະ ຄວາມປອດໄພ ເຊິ່ງຄະນະຜູ້ແທນແຕ່ລະປະເທດ,ອົງການຈັດຕັ້ງສາກົນ ແລະ ຜູ້ຊ່ຽວຊານໄດ້ຜັດປ່ຽນກັນແລກປ່ຽນບົດຮຽນ ແລະ ສົນທະນາຢ່າງກວ້າງຂວາງ ແລະ ກົງໄປກົງມາ ເຮັດໃຫ້ກອງປະຊຸມໄດ້ຮັບຜົນສຳເລັດຢ່າງຈົບງາມ.

# ກອງປະຊຸມຄົບຄະນະ ກວສຊ




(ສພຊ) - ກອງປະຊຸມຄົບຄະນະຂອງກຳມາທິການວຽກງານສະມາຊິກສະພາແຫ່ງຊາດ (ກວສຊ) ປະຈຳປີ 2025 ໄດ້ຈັດຂຶ້ນເມື່ອວັນທີ 1 ພະຈິກຜ່ານມາ ທີ່ເມືອງແກ້ວອຸດົມ ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ສຸບັນ ສະອະບຸດ ກຳມະການຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ), ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ, ເຂົ້າຮ່ວມມີທ່ານ ຄຳໃບ ດຳລັດ ຮອງປະທານຄະນະປະຈຳສະພາແຫ່ງຊາດ, ບັນດາທ່ານເລຂາທິການ ແລະ ຮອງເລຂາທິການສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ (ສສຊ) ທີ່ເປັນກຳມະການສັງກັດ ກວສຊ ແລະ ແຂກຖືກເຊີນ; ຈຸດປະສົງເພື່ອສະຫຼຸບຕີລາຄາການເຄື່ອນໄຫວວຽກງານ 5 ປີ (2021-2025), ປີ 2025 ແລະ ກຳນົດທິດທາງແຜນການເຄື່ອນໄຫວແຕ່ນີ້ຫາກອງປະຊຸມຄັ້ງປະຖົມມະລຶກຂອງ ສພຊ ຊຸດທີ X ແລະ ປຶກສາຫາລື, ແລກປ່ຽນຄຳເຫັນບາງວຽກງານທີ່ຈຳເປັນ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງກຳມາທິການ.

ກອງປະຊຸມໄດ້ຮັບຟັງບົດສະຫຼຸບການຈັດຕັ້ງປະຕິບັດວຽກງານປະຈຳ 5 ປີ (2021-2025)ແລະທິດທາງແຜນການ 5 ປີ (2026-2030) ແລະ ບົດສະເໜີການສ້າງຮ່າງມະຕິຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງວ່າດ້ວຍການຈັດຕັ້ງແລະການເຄື່ອນໄຫວວຽກງານຂອງຄະນະສະມາຊິກສະພາປະຊາຊົນຂັ້ນແຂວງປະຈຳເຂດເລືອກຕັ້ງເມືອງ; ຈາກນັ້ນ, ໄດ້ພ້ອມກັນສຸມສະຕິປັນຍາເຂົ້າໃນການຄົ້ນຄວ້າ, ປະກອບຄຳເຫັນຢ່າງມີຈຸດສຸມ ແລະ ເລິກເຊິ່ງ ເພື່ອເປັນພື້ນຖານໃຫ້ ກວສຊ ນຳໄປຄົ້ນຄວ້າ ແລະ ສະເໜີ ຄປຈສພຊ ມີທິດຊີ້ນຳ ແນໃສ່ປັບປຸງຄຸນນະພາບ, ສ້າງຄວາມເຂັ້ມແຂງ ກໍຄືເຮັດໃຫ້ລະບົບກົງຈັກຂອງ ສພຊ, ສະພາປະຊາຊົນຂັ້ນແຂວງ (ສພຂ) ໃນສະເພາະໜ້າ ແລະ ຍາວນານມີປະສິດທິພາບ, ປະສິດທິຜົນສູງຂຶ້ນເລື້ອຍໆ.

ທ່ານ ຄຳໃບ ດຳລັດ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານທີ່ກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ຍາດມາໄດ້ຕະຫຼອດໄລຍະ 5 ປີຜ່ານມາ ແລະ ເຫັນດີເອກະພາບໂດຍພື້ນຖານຕໍ່ການກຳນົດແຜນວຽກຈຸດສຸມໃນແຕ່ລະດ້ານຂອງກຳມາທິການ ພ້ອມທັງເນັ້ນໜັກໃຫ້ຄົ້ນຄວ້າແລະກຳນົດໂຄງປະກອບກົງຈັກການຈັດຕັ້ງ ແລະ ບຸກຄະລາກອນຂອງສພຊແລະ ສພຂ ຢ່າງເໝາະສົມ; ເອົາໃຈໃສ່ຕິດຕາມ, ຊຸກຍູ້ການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຄະນະສະມາຊິກສະພາແຫ່ງຊາດ; ສືບຕໍ່ຜັນຂະຫຍາຍບັນດາກົດໝາຍທີ່ຕິດພັນກັບພາລະບົດບາດຂອງກຳມາທິການມາເປັນນິຕິກຳຂອງຄະນະປະຈຳສະພາແຫ່ງຊາດ; ເອົາໃຈໃສ່ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ກະກຽມວຽກງານຮອບດ້ານກ່ຽວກັບການເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດທີX ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ) ຊຸດທີ V ເປັນຕົ້ນ: ເອກະສານ, ນິຕິກຳຕ່າງໆຮັບໃຊ້ແກ່ການເລືອກຕັ້ງ, ການກຳນົດຈຳນວນ ສສຊ ແລະ ສສຂ, ຈຳນວນຜູ້ລົງສະໝັກ, ສັດສ່ວນຈາກແຕ່ລະຂົງເຂດ, ເຜົ່າ, ເພດ ແລະ ອື່ນໆ; ເປັນເຈົ້າການປະສານສົມທົບກັບບັນດາອະນຸກຳມະການຂອງຄະນະກຳມະການເລືອກຕັ້ງລະດັບຊາດ (ຄລຊ) ແລະ ຈັດຕັ້ງປະຕິບັດຕາມແຜນການຂອງຄປຈສພຊ ແລະແຜນດຳເນີນງານຂອງຄລຊ ເພື່ອກະກຽມ ແລະ ດຳເນີນການເລືອກຕັ້ງ; ເອົາໃຈໃສ່ກະກຽມຮອບດ້ານ, ເປັນເຈົ້າການ ແລະ ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໃຫ້ແກ່ການດຳເນີນກອງປະຊຸມຄັ້ງປະຖົມມະລຶກຂອງ ສພຊ ຊຸດທີ X ສພຂ ຊຸດທີ V ຢ່າງມີປະສິດທິພາບ.

**(ນາງ ອາລິນ ສຸພົມມະປະດິດ)**

# ພິທີມອບ-ຮັບເຄື່ອງໃຫ້ປະຊາຊົນບ້ານຫ້ອຍເດື່ອ



(ສພຊ) - ວັນທີ 31 ຕຸລາຜ່ານມາ, ສະພາແຫ່ງຊາດ ພ້ອມດ້ວຍຄະນະກອງທຶນຊ່ວຍເຫຼືອສັງຄົມຂອງສະພາແຫ່ງຊາດ ໄດ້ຈັດພິທີມອບ-ຮັບເຄື່ອງອຸປະໂພກ-ບໍລິໂພກ ໃຫ້ແກ່ຜູ້ປະສົບໄພນ້ຳຖ້ວມ ທີ່ບ້ານຫ້ອຍເດື່ອ ເມືອງໂພນໂຮງ ແຂວງວຽງຈັນ ປະກອບມີ: ເຄື່ອງກອງນ້ຳ, ເຂົ້າສານ, ເຄື່ອງນຸ່ງຫົ່ມ, ເຄື່ອງບ່ອນນອນ, ນ້ຳດື່ມ, ໝີ່, ປາກະປ໋ອງ, ເຂົ້າໜົມ ແລະ ເງິນສົດຈຳນວນ 110 ລ້ານກີບ ລວມມູນຄ່າທັງໝົດ 300 ລ້ານກີບ, ຕາງໜ້າມອບໂດຍທ່ານ ດຣ. ນາງ ວິພາວັນພົມວິຫານປະທານກອງທຶນຊ່ວຍເຫຼືອສັງຄົມ ແລະ ຕາງໜ້າຮັບໂດຍທ່ານ ສີປະເສີດ ນາຍບ້ານໆຫ້ອຍເດື່ອ, ມີທ່ານ ບຸນສອນ ເພັດລາວັນປະທານສະພາປະຊາຊົນແຂວງວຽງຈັນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມເປັນສັກຂີພະຍານ.

**(ນາງ ກຸກກິກ ບຸດດາໄຊ)**

# ຍົກສູງຄຸນນະພາບກົນໄກປະສານງານການແກ້ໄຂຄຳຮ້ອງຂໍຄວາມເປັນ




(ສພຊ) - ກອງປະຊຸມຍົກສູງຄຸນນະພາບກ່ຽວກັບກົນໄກການປະສານງານໃນການແກ້ໄຂຄຳຮ້ອງຂໍຄວາມເປັນທຳລະຫວ່າງກຳມາທິການຍຸຕິທຳ (ກມຍທ) ກັບ ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ກະຊວງຍຸຕິທຳ, ອົງການສືບສວນ-ສອບສວນ (ກະຊວງປ້ອງກັນຄວາມສະຫງົບ) ໄດ້ດຳເນີນໃນວັນທີ 27-28 ຕຸລາຜ່ານມາ ທີ່ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ນາງທຸມມາລີວົງພະຈັນປະທານກຳມາທິການຍຸຕິທຳ, ມີບັນດາທ່ານຮອງປະທານກຳມາທິການ ແລະ ຮອງຫົວໜ້າສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ (ສສຊ) ທີ່ເປັນກຳມະການຂອງກມຍທ, ຮອງປະທານສານປະຊາຊົນສູງສຸດ, ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ຮອງລັດຖະມົນຕີກະຊວງຍຸຕິທຳ, ຮອງປະທານອົງການກວດກາແຫ່ງລັດ, ຫົວໜ້າກົມໃຫຍ່ຕຳຫຼວດກະຊວງປ້ອງກັນຄວາມສະຫງົບ, ຮອງປະທານສານທະຫານຂັ້ນສູງ, ຮອງຫົວໜ້າອົງການໄອຍະການທະຫານຂັ້ນສູງ ພ້ອມດ້ວຍຕາງໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ກະຊວງກະສິກຳແລະສິ່ງແວດລ້ອມ, ກະຊວງການເງິນ, ສະພາທະນາຍຄວາມ ຕະຫຼອດຮອດຄະນະກົມ, ຄະນະພະແນກ ແລະ ພະນັກງານຈາກພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມພຽງ.

ຈຸດປະສົງເພື່ອສ້າງຄວາມຮັບຮູ້ ແລະ ຄວາມເຂົ້າໃຈຢ່າງເລິກເຊິ່ງ ກ່ຽວກັບກົນໄກການປະສານງານໃນການແກ້ໄຂຄຳຮ້ອງຂໍຄວາມເປັນທຳໃນແຕ່ລະຂັ້ນຕອນຢ່າງລະອຽດ ແລະ ຮັບປະກັນເຮັດໃຫ້ການຈັດຕັ້ງປະຕິບັດວຽກງານ ມີຄວາມເປັນເອກະພາບ, ຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍ ສາມາດນຳໄປຈັດຕັ້ງປະຕິບັດໄດ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນ; ປັບປຸງຄຸນນະພາບກົນໄກການປະສານງານໃນການແກ້ໄຂຄຳຮ້ອງຂໍຄວາມເປັນທຳລະຫວ່າງກຳມາທິການຍຸຕິທຳ ກັບ ພາກສ່ວນທີ່ກ່ຽວຂ້ອງ ໃຫ້ແກ່ ສສຊ ທີ່ສັງກັດ ກມຍທ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງທີ່ສັງກັດຄະນະກຳມະການຍຸຕິທຳແລະປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃນຂອບເຂດທົ່ວປະເທດ ໃຫ້ມີຄວາມໂລ່ງລຽນ; ສະຫຼຸບຖອດຖອນບົດຮຽນກົນໄກການປະສານງານການແກ້ໄຂຄຳຮ້ອງຂໍຄວາມເປັນທຳໃນໄລຍະຜ່ານມາ ຕາມກົດໝາຍກຳນົດໄວ້ ໂດຍສະເພາະແມ່ນມາດຕາ 34 ຂອງກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ສະບັບປັບປຸງປີ 2022 ແລະ ນິຕິກຳທີ່ໄດ້ມີຮ່ວມກັນ ເພື່ອປັບປຸງກົນໄກການປະສານງານໃນການແກ້ໄຂຄຳຮ້ອງຂໍຄວາມເປັນທຳ ລະຫວ່າງ ກມຍທ ກັບພາກສ່ວນທີ່ກ່ຽວຂ້ອງໃນຕໍ່ໜ້າ.

ທ່ານ ນາງ ທຸມມາລີ ວົງພະຈັນ ກ່າວວ່າ: ກອງປະຊຸມຄັ້ງນີ້ ເພື່ອສານຕໍ່ລົງເລິກວິເຄາະ, ວິໄຈຮ່ວມກັນ ລະຫວ່າງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ກັບ ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ອົງການບໍລິຫານ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຊອກຫາສາເຫດ ແລະ ວິທີການແກ້ໄຂບັນຫາຮ່ວມກັນແນໃສ່ຍົກສູງຄຸນນະພາບກ່ຽວກັບກົນໄກ ແລະ ເນື້ອໃນການພິຈາລະນາແກ້ໄຂຄຳຮ້ອງທຸກຂອງປະຊາຊົນ(ຄຳສະເໜີ, ຄຳຮ້ອງຟ້ອງ ແລະ ຄຳຮ້ອງຂໍຄວາມເປັນທຳ) ໃຫ້ຮັບປະກັນຄວາມຖືກຕ້ອງຕາມກົດໝາຍ, ສອດຄ່ອງກັບຄວາມເປັນຈິງ ແລະ ມີຄວາມຍຸຕິທຳ ເພື່ອສ້າງຄວາມເຊື່ອໝັ້ນ, ສັດທາຂອງປະຊາຊົນຕໍ່ການດຳເນີນຄະດີຕາມຂະບວນການຍຸຕິທຳ ໃຫ້ໜັກແໜ້ນຍິ່ງຂຶ້ນ; ພ້ອມນັ້ນ, ຍັງໄດ້ທົບທວນ, ສະຫຼຸບຖອດຖອນບົດຮຽນຄືນໃນການຈັດຕັ້ງປະຕິບັດພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ ຂອງແຕ່ລະພາກສ່ວນ ທີ່ມີຄວາມຮັບຜິດຊອບວຽກງານການດຳເນີນຄະດີຕາມຂະບວນການຍຸຕິທຳ ແລະ ການແກ້ໄຂຄຳຮ້ອງທຸກຕາມທີ່ກົດໝາຍໄດ້ກຳນົດ ເພື່ອຊອກໃຫ້ເຫັນດ້ານດີທີ່ຈະຕ້ອງໄດ້ສືບຕໍ່ເສີມຂະຫຍາຍ ແລະ ດ້ານອ່ອນຄົງຄ້າງທີ່ຕ້ອງໄດ້ປັບປຸງແກ້ໄຂໃນຕໍ່ໜ້າ ເພື່ອສ້າງຄວາມຮັບຮູ້ເຂົ້າໃຈທີ່ເປັນເອກະພາບ, ປັບປຸງກົນໄກການປະສານງານ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ເພື່ອນຳເອົາຜົນປະໂຫຍດສູງສຸດມາໃຫ້ປະເທດຊາດ ແລະ ປະຊາຊົນ, ປະກອບສ່ວນເຮັດໃຫ້ ສປປລາວ ມີສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບສຸກ, ເປັນລະບຽບຮຽບຮ້ອຍ, ມີຄວາມສາມັກຄີປອງດອງ, ສີວິໄລ ແລະ ຍຸຕິທຳ.

ກອງປະຊຸມໄດ້ຮັບຟັງການສະເໜີບົດກ່ຽວກັບການຮັບ, ການໃຫ້ຄຳປຶກສາ, ການຄົ້ນຄວ້າ, ພິຈາລະນາ, ການປະສານງານ ແລະ ການຕິດຕາມກວດກາ ໃນການແກ້ໄຂຄຳຮ້ອງຂໍຄວາມເປັນທຳຕາມກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ສະບັບປັບປຸງປີ 2022 ແລະ ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2024; ກົນໄກການປະສານງານໃນການແກ້ໄຂຄຳຮ້ອງຂໍຄວາມເປັນທຳ ທີ່ພົວພັນກັບຄວາມຮັບຜິດຊອບຂອງກະຊວງປ້ອງກັນຄວາມສະຫງົບ (ອົງການສືບສວນ-ສອບສວນ), ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ ແລະ ອົງການກວດກາແຫ່ງລັດ; ກົນໄກການປະສານງານໃນການປະຕິບັດຄຳຕັດສິນຂອງສານ, ການພິຈາລະນາ ແລະ ແກ້ໄຂຄຳສະເໜີ ແລະ ຄຳຮ້ອງຂໍຄວາມເປັນທຳ ທີ່ພົວພັນກັບການປະຕິບັດຄຳຕັດສິນຂອງສານ; ກົນໄກການປະສານງານໃນການພິຈາລະນາ

ອ່ານຕໍ່ໜ້າ 12

## ທັດສະນະສຶກສາ ບໍລິສັດ ເບຍລາວ ຈຳກັດ



(ສພຊ) - ວັນທີ 3 ພະຈິກຜ່ານມາ, ທ່ານ ບຸນຕາ ເທບພະວົງ ກຳມະການສຳຮອງສູນກາງພັກ, ກຳມະການຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ), ປະທານກຳມາທິການວັດທະນະທຳ-ສັງຄົມ ພ້ອມດ້ວຍບັນດາທ່ານໃນ ຄປຈສພຊ, ຮອງປະທານກຳມາທິການແລະຮອງເລຂາທິການສະພາແຫ່ງຊາດ, ຮອງລັດຖະມົນຕີກະຊວງສາທາລະນະສຸກ ແລະ ຮອງປະທານອົງການກາແດງລາວ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ ໄດ້ທັດສະນະສຶກສາຢ້ຽມຢາມບໍລິສັດ ເບຍລາວຈຳກັດ ໂດຍການຕ້ອນຮັບຂອງທ່ານ ເຣັນຣິກ ເອັນເດີເຊັນ ຜູ້ອຳນວຍການໃຫຍ່ບໍລິສັດ ເບຍລາວ ຈຳກັດ ພ້ອມດ້ວຍຄະນະ.

ໃນການທັດສະນະຄັ້ງນີ້ ໄດ້ຮັບຟັງການນຳສະເໜີຜົນງານການເຄື່ອນໄຫວຂອງບໍລິສັດ ເບຍລາວ ຈຳກັດ ກໍຄືວຽກງານທີ່ພົ້ນເດັ່ນ, ການດຳເນີນໂຄງການຊ່ວຍເຫຼືອສັງຄົມ ແລະ ຄວາມຍືນຍົງ Together towards Zero and Beyone, ຜົນໄດ້ຮັບຈາກໂຄງການສົ່ງເສີມການປູກເຂົ້າແບບຍືນຍົງ ໂດຍສະເພາະການປູກເຂົ້າບາເລ, ເຂົ້າໄກ່ນ້ອຍແລະເຂົ້າຈ້າວພັນລາວ ເຊິ່ງບໍລິສັດໄດ້ຮ່ວມກັບກະຊວງກະສິກຳ ແລະ ສິ່ງແວດລ້ອມ ໃນການຄົ້ນຄວ້າ, ພັດທະນາສາຍພັນເຂົ້າ, ປັດໄຈທີ່ສົ່ງຜົນກະທົບຕໍ່ເສດຖະກິດ ເຊັ່ນ: ການຈ້າງງານ, ການປະກອບທຶນ, GDP ແລະ ການຂະຫຍາຍສະມາຊິກປະກັນສັງຄົມ, ແນວທາງນະໂຍບາຍໃນການດຳເນີນທຸລະກິດໃຫ້ມີຄວາມຍືນຍົງ ແລະ ການວາງເປົ້າໝາຍສ້າງນະວັດຕະກຳໃໝ່.

ທ່ານບຸນຕາເທບພະວົງ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນສຳເລັດທີ່ບໍລິສັດ ເບຍລາວ ຈຳກັດຍາດມາໄດ້ໃນໄລຍະຜ່ານມາ ແລະ ຜົນງານພົ້ນເດັ່ນຕ່າງໆ ທີ່ບໍລິສັດໄດ້ປະກອບສ່ວນຕະຫຼອດມາ ໂດຍສະເພາະການປະກອບສ່ວນເສຍພັນທະອາກອນເຂົ້າງົບປະມານລັດ, ການປະກອບສ່ວນທາງດ້ານທຶນຮອນ ແລະ ຊັບສິນ ເຂົ້າໃນການຊ່ວຍເຫຼືອສັງຄົມ, ຊ່ວຍເຫຼືອບັນເທົາທຸກຜົນກະທົບຈາກໄພພິບັດ, ການສົ່ງເສີມ ແລະ ພັດທະນາທາງດ້ານການສຶກສາ, ວິທະຍາສາດ ແລະ ກິລາ, ການປູກຝັງຜະລິດເຂົ້າ, ວຽກງານສາທາລະນະສຸກ ກໍຄືວຽກງານຮັກສາສຸຂະພາບ, ການພັດທະນາສີມືແຮງງານ ແລະ ສະຫວັດດີການສັງຄົມ; ທ່ານຍັງແຈ້ງໃຫ້ຊາບເຖິງການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໂດຍສະເພາະວຽກງານໃນຂົງເຂດວັດທະນະທຳ-ສັງຄົມ ບາງດ້ານຍັງມີຂໍ້ຫຍຸ້ງຍາກ ແລະ ບໍ່ທັນບັນລຸຕາມຄາດໝາຍວາງໄວ້ ເປັນຕົ້ນ: ການພັດທະນາສີມືແຮງງານທີ່ມີຄຸນນະພາບ ຍັງບໍ່ທັນຕອບສະໜອງກັບຕະຫຼາດແຮງງານທັງພາຍໃນ ແລະ ຕ່າງປະເທດ, ການພັດທະນາແຫຼ່ງທ່ອງທ່ຽວ, ພື້ນຖານໂຄງລ່າງຍັງບໍ່ຕອບສະໜອງ. ພ້ອມກັນນັ້ນ, ກໍສະເໜີໃຫ້ສືບຕໍ່ຊ່ວຍເຫຼືອສັງຄົມດ້ານຕ່າງໆ ໃນຂົງເຂດວຽກງານວັດທະນະທຳ-ສັງຄົມໂດຍສະເພາະຂະຫຍາຍການຊ່ວຍເຫຼືອໃຫ້ແກ່ກຸ່ມຄົນພິການ, ກຸ່ມຄົນຜູ້ທຸກຍາກຜູ້ດ້ອຍໂອກາດ ເພື່ອສ້າງວຽກເຮັດງານທຳ, ການໃຫ້ທຶນສົ່ງເສີມການສຶກສາຫຼາຍຂຶ້ນ, ການພັດທະນາພື້ນຖານໂຄງລ່າງດ້ານການສຶກສາ ແລະ ສາທາໃນເຂດຊົນນະບົດເຂດຫ່າງໄກສອກຫຼີກ, ການສ້າງກິດຈະກຳສົ່ງເສີມທາງດ້ານສຸຂະພາບ.

ຫຼັງຈາກນັ້ນ, ຄະນະຜູ້ແທນໄດ້ເຂົ້າຢ້ຽມຊົມຂະບວນການຜະລິດຕ່າງໆ ຂອງບໍລິສັດ ເບຍລາວ ຈຳກັດ.

**(ນາງ ອາລິນ ສຸພົມມະປະດິດ)**

## ສຳເລັດການເຂົ້າຮ່ວມກອງປະຊຸມສຳມະນາ "ສະມາຊິກສະພາແຫ່ງຊາດລາວ" ທີ່ນະຄອນໜານຊາງ




(ສພຊ) - ລະຫວ່າງວັນທີ 16 ຕຸລາ - 5 ພະຈິກ 2025, ທ່ານປອ.ອາຄົມປຣະເສີດຮອງເລຂາທິການສະພາແຫ່ງຊາດ ພ້ອມດ້ວຍຄະນະຜູ້ແທນສະມາຊິກສະພາແຫ່ງຊາດ (ສສຊ) ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ) ຈຳນວນ 24 ທ່ານ ຈາກບັນດາເຂດເລືອກຕັ້ງທົ່ວປະເທດ ໄດ້ເດີນທາງໄປເຂົ້າຮ່ວມກອງປະຊຸມສຳມະນາໃນຫົວຂໍ້: "ສະມາຊິກສະພາແຫ່ງຊາດລາວ" ທີ່ນະຄອນໜານຊາງ, ແຂວງຈ່ຽງຊີ, ສປຈີນ; ຈຸດປະສົງກອງປະຊຸມສຳມະນາຄັ້ງນີ້ ແມ່ນເພື່ອສ້າງຄວາມຮູ້ແລະປະສົບການອັນເປັນພື້ນຖານ ໃຫ້ແກ່ ສສຊ ແລະ ສສຂ ເພື່ອນຳໄປໝູນໃຊ້ເຂົ້າໃນການປະຕິບັດບົດບາດເປັນເສນາທິການໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ.

ການເຂົ້າຮ່ວມກອງປະຊຸມສຳມະນາຄັ້ງນີ້ ໄດ້ຮຽນຮູ້ກ່ຽວກັບລະບົບສະພາຜູ້ແທນປະຊາຊົນ, ການປົກຄອງ, ການພັດທະນາປະເທດ, ການພັດທະນາເຕັກໂນໂລຊີລະດັບສູງ, ການສ້າງຄວາມສາມາດໃນການໃຫ້ບໍລິການຂອງພະນັກງານ-ລັດຖະກອນ, ການຄຸ້ມຄອງວິກິດການສາທາລະນະຂັ້ນຮາກຖານ, ການຄຸ້ມຄອງໜີ້ສິນ,ການດຶງດູດການລົງທຶນໂດຍກົງຈາກຕ່າງປະເທດ, ການບໍລິການສາທະລະນະ ແລະ ການບໍລິການການຈັດຫາງານຂອງປະເທດຈີນ ຈາກການຖ່າຍທອດບົດຮຽນຂອງບັນດາອາຈານຜູ້ທີ່ຊ່ຽວຊານ ແລະ ລົງໄປທັດສະນະສຶກສາຕົວຈິງຢູ່ສະຖານທີ່ປະຫວັດສາດ, ເຂດວັດທະນະທຳ ແລະ ບໍລິສັດຕ່າງໆຈຳນວນໜຶ່ງ.

ໃນລະຫວ່າງການເຂົ້າຮ່ວມກອງປະຊຸມສຳມະນາ, ຄະນະຜູ້ແທນລາວ ໄດ້ເຂົ້າຢ້ຽມຂໍ່ານັບທ່ານ ຫວັງ ເສົາຊວນ (Wang Shaoxuan) ຮອງປະທານຄະນະປະຈຳສະພາຜູ້ແທນປະຊາຊົນແຂວງຈ່ຽງຊີ ເຊິ່ງທ່ານໄດ້ສະແດງຄວາມຍິນດີຕ້ອນຮັບ ແລະ ຕີລາຄາສູງຕໍ່ການເດີນທາງມາເຂົ້າຮ່ວມກອງປະຊຸມສຳມະນາຄັ້ງນີ້ແລະການພົວພັນຮ່ວມມືລະຫວ່າງສອງປະເທດ ຈີນ-ລາວ ໃນຕະຫຼອດໄລຍະທີ່ຜ່ານມາ; ພ້ອມກັນນີ້, ທ່ານມີຄວາມຍິນດີທີ່ຈະຊ່ວຍຊຸກຍູ້ໃຫ້ສະພາການຄ້າແຂວງກໍຄືນັກທຸລະກິດແຂວງຈ່ຽງຊີ ໄປສຶກສາຄວາມເປັນໄປໄດ້ການລົງທຶນຢູ່ ສປປ ລາວ ແລະ ຈະຊ່ວຍຊຸກຍູ້ເສີມຂະຫຍາຍສາຍພົວພັນການຮ່ວມມືລະຫວ່າງແຂວງດ້ວຍກັນ ກໍຄືສະພາຜູ້ແທນປະຊາຊົນແຂວງດ້ວຍກັນຂອງສອງປະເທດທີ່ຍັງບໍ່ທັນມີການເຮັດບົດບັນທຶກການແຮກສ່ຽວກັບ ສປຈີນ.

## ແຕ່ງຕັ້ງ...

(ຕໍ່ຈາກໜ້າ 1)

ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ເຊິ່ງປະກອບດ້ວຍພະນັກງານການນຳຂັ້ນສູງ ຈຳນວນ 21 ທ່ານ, ຍິງ 6 ທ່ານ ແລະ ມີຄະນະປະຈຳການ 10 ທ່ານ, ຍິງ 2 ທ່ານ; ຄະນະກຳມະການເລືອກຕັ້ງລະດັບຊາດ ແລະ ຄະນະປະຈຳການດັ່ງກ່າວ ມີສິດ ແລະ ໜ້າທີ່ນຳພາ-ຊີ້ນຳການຈັດຕັ້ງດຳເນີນການເລືອກຕັ້ງ ໃຫ້ຖືກຕ້ອງຕາມລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການ, ຮັບປະກັນໃຫ້ການເລືອກຕັ້ງ ບັນລຸຜົນສຳເລັດຕາມຈຸດປະສົງແລະລະດັບຄາດໝາຍທີ່ກຳນົດໄວ້.

ເພື່ອຮັບປະກັນໃຫ້ການດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ) ຊຸດທີ V ມີປະສິດທິພາບ, ປະສິດທິຜົນ ແລະສຳເລັດຜົນທັນຕາມກຳນົດເວລາທີ່ກຳນົດໄວ້; ໃນຕອນເຊົ້າວັນທີ 27 ຕຸລານີ້, ຄະນະກຳມະການເລືອກຕັ້ງລະດັບຊາດ ໄດ້ດຳເນີນກອງປະຊຸມຄັ້ງປະຖົມມະລຶກຂອງຕົນ ພາຍໃຕ້ການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ, ປະທານຄະນະກຳມະການເລືອກຕັ້ງລະດັບຊາດ ເພື່ອພິຈາລະນາ ແລະ ຕົກລົງວຽກງານສຳຄັນທີ່ຈຳເປັນ ແລະ ຮີບດ່ວນ ຈຳນວນໜຶ່ງ ໃນການກະກຽມໃຫ້ແກ່ການເລືອກຕັ້ງ ສສຊ ຊຸດທີ X ແລະ ສສຂ ຊຸດທີ V ເຊິ່ງມີເນື້ອໃນ ແລະ ຜົນສຳເລັດ ດັ່ງນີ້:

1. ກອງປະຊຸມໄດ້ພ້ອມກັນຄົ້ນຄວ້າແລະເຊື່ອມຊຶມມະຕິກົມການເມືອງສູນກາງພັກກ່ຽວກັບການເພີ່ມທະວີການນຳພາ-ຊີ້ນຳຂອງອົງຄະນະພັກທຸກຂັ້ນ ຕໍ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V.

2. ຜ່ານມະຕິຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ແລະ ລັດຖະດຳລັດຂອງປະທານປະເທດ ແຫ່ງ ສປປລາວ ວ່າດ້ວຍການແຕ່ງຕັ້ງຄະນະກຳມະການເລືອກຕັ້ງລະດັບຊາດ ເພື່ອການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V.

3. ຜ່ານມະຕິຂອງຄະນະກຳມະການເລືອກຕັ້ງລະດັບຊາດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມະການເລືອກຕັ້ງລະດັບຊາດ ເພື່ອການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V; ໃນນີ້, ໄດ້ກຳນົດລະອຽດກ່ຽວກັບສິດ ແລະ ໜ້າທີ່ຂອງຄະນະກຳມະການເລືອກຕັ້ງລະດັບຊາດ ແລະ ຄະນະປະຈຳການ.

4. ຜ່ານແຜນການດຳເນີນງານຂອງຄະນະກຳມະການເລືອກຕັ້ງລະດັບຊາດ ເພື່ອການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V; ໃນນີ້, ໄດ້ກຳນົດລະອຽດກ່ຽວກັບຈຸດປະສົງແລະລະດັບຄາດໝາຍ, ທັດສະນະຊີ້ນຳ, ທິດທາງ, ວຽກຈຸດສຸມ ແລະ ບາດກ້າວດຳເນີນການກະກຽມການເລືອກຕັ້ງແຕ່ນີ້ຈົນຮອດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງຊຸດໃໝ່.

5. ຜ່ານມະຕິຂອງຄະນະກຳມະການເລືອກຕັ້ງລະດັບຊາດ ວ່າດ້ວຍການແບ່ງງານ, ແບ່ງຄວາມຮັບຜິດຊອບພາຍໃນຄະນະກຳມະການເລືອກຕັ້ງລະດັບຊາດ; ໃນນີ້, ໄດ້ມອບໝາຍໜ້າທີ່ ແລະ ຄວາມຮັບຜິດຊອບລະອຽດໃຫ້ແຕ່ລະທ່ານ.

6. ຜ່ານມະຕິຂອງຄະນະກຳມະການເລືອກຕັ້ງລະດັບຊາດ ວ່າດ້ວຍການແຕ່ງຕັ້ງແລະການເຄື່ອນໄຫວວຽກງານຂອງບັນດາອະນຸກຳມະການຄະນະກຳມະການເລືອກຕັ້ງລະດັບຊາດ ເຊິ່ງລວມມີ 5 ອະນຸກຳມະການ ຄື: (1) ອະນຸກຳມະການເລຂານຸການ; (2) ອະນຸກຳມະການໂຄງປະກອບ ແລະ ບຸກຄະລາກອນ; (3) ອະນຸກຳມະການໂຄສະນາ, ປຸກລະດົມຂະບວນການ ແລະ ຍ້ອງຍໍ; (4) ອະນຸກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; (5) ອະນຸກຳມະການບໍລິຫານ ແລະ ງົບປະມານ.

ເພື່ອຜັນຂະຫຍາຍມະຕິກົມການເມືອງສູນກາງພັກ ແລະ ແຜນດຳເນີນງານຂອງຄະນະກຳມະການເລືອກຕັ້ງລະດັບຊາດ ໃຫ້ແທດເຖິງ, ທັນເວລາ ແລະ ເກີດເປັນໝາກຜົນຕົວຈິງ, ທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ໄດ້ສະເໜີໃຫ້ສະພາປະຊາຊົນຂັ້ນແຂວງ ຈົ່ງຮີບຮ້ອນຄົ້ນຄວ້າແຕ່ງຕັ້ງຄະນະກຳມະການເລືອກຕັ້ງລະດັບທ້ອງຖິ່ນ(ຂັ້ນແຂວງແລະຂັ້ນເມືອງ)ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 28 ແລະ 30 ຂອງກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບປີ 2024 ແລ້ວວາງແຜນດຳເນີນງານລະອຽດຂອງຕົນ ເພື່ອຈັດຕັ້ງປະຕິບັດໃຫ້ທັນເວລາ ແລະ ມີໝາກຜົນຕົວຈິງຢູ່ໃນທ້ອງຖິ່ນຂອງຕົນ; ພ້ອມກັນນີ້, ກໍຮຽກຮ້ອງໄປຍັງປະຊາຊົນລາວບັນດາເຜົ່າທຸກທົ່ວໜ້າ ເປັນຕົ້ນແມ່ນຜູ້ມີສິດເລືອກຕັ້ງ ຈົ່ງພ້ອມກັນຊອກຮູ້ຮ່ຳຮຽນກ່ຽວກັບກົດໝາຍ ແລະ ລະບຽບການເລືອກຕັ້ງ, ຍົກສູງຈິດໃຈເປັນເຈົ້າປະເທດຊາດ,ຕັ້ງໜ້າກະກຽມແລະເຂົ້າຮ່ວມຂະບວນການເລືອກຕັ້ງເທື່ອນີ້ ໃຫ້ເກີດເປັນໝາກຜົນຕົວຈິງ ຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ວາງໄວ້.

# ຕິດຕາມກວດກາ ແລະ ຊຸກຍູ້ການປະຕິບັດວຽກງານຢູ່ອົງການໄອຍະການປະຊາຊົນພາກກາງ ແລະ ສຳມະນາຮ່າງຂໍ້ຕົກລົງການຄຸ້ມຄອງລະບົບການບຳບັດນໍ້າເປື້ອນໃນ ນວ



(ສປນວ) - ໃນວັນທີ 14 ຕຸລາ ຜ່ານມານີ້, ທ່ານ ນາງ ສົມພຽນ ວົງໄຊ ປະທານ ຄະນະກຳມະການຍຸຕິທຳແລະປກຊ-ປກສ ສະພາປະຊາຊົນ ນວ ໄດ້ລົງເຄື່ອນໄຫວວຽກຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຢູ່ອົງການໄອຍະການປະຊາຊົນພາກກາງ, ໃຫ້ກຽດເຂົ້າຮ່ວມ ໂດຍ ທ່ານ ອານຸພາບ ຕຸນາລົມ ຄະນະເລຂາທິການສູນກາງພັກ, ເລຂາຄະນະພັກ ນວ, ປະທານສະພາປະຊາຊົນ ນວ, ມີບັນດາທ່ານ ສະມາຊິກສະພາປະຊາຊົນ ນວ, ໃຫ້ການຕ້ອນຮັບໂດຍທ່ານ ຈັນທີ ໂປລີວັນ ຫົວໜ້າອົງການໄອຍະການປະຊາຊົນພາກກາງ, ມີບັນດາທ່ານຮອງຫົວໜ້າອົງການໄອຍະການພາກກາງ, ຫົວໜ້າ-ຮອງຫົວໜ້າອົງການໄອຍະການປະຊາຊົນນະຄອນຫຼວງ, ອົງການໄອຍະການປະຊາຊົນເຂດ ທັງ 4 ເຂດ ພ້ອມດ້ວຍພະນັກງານຫຼັກແຫຼ່ງເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການລາຍງານໂດຍຫຍໍ້ກ່ຽວກັບສະພາບການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໃນໄລຍະຜ່ານມາ 1 ປີ ຂອງອົງການໄອຍະການປະຊາຊົນພາກກາງ, ນະຄອນຫຼວງ ແລະ ໄອຍະການປະຊາຊົນເຂດ ເຊິ່ງການລົງເຄື່ອນໄຫວໃນຄັ້ງນີ້ ກໍເພື່ອຕິດຕາມກວດກາແລະຊຸກຍູ້ການຈັດຕັ້ງປະຕິບັດວຽກງານ ແລະ ບັນດາຄາດໝາຍສູ້ຊົນ, ແຜນວຽກຈຸດສຸມທີ່ສະພາປະຊາຊົນ ນະຄອນຫຼວງວຽງຈັນ ໄດ້ຮັບຮອງ ຕາມມະຕິກອງປະຊຸມສະໄໝສາມັນເທື່ອທີ 8 ແລະ ຊອກໃຫ້ເຫັນດ້ານຫຍຸ້ງຍາກຕ່າງໆ ພ້ອມທັງສະເໜີບາງມາດຕະການໃນການຈັດຕັ້ງປະຕິບັດແຜນດັ່ງກ່າວໃຫ້ດຳເນີນໄປຢ່າງຕໍ່ເນື່ອງແລະມີຜົນສຳເລັດຕາມລະດັບຄາດໝາຍ.

ໃນໂອກາດດັ່ງກ່າວ, ຜູ້ແທນກອງປະຊຸມກໍໄດ້ແລກປ່ຽນຄຳເຫັນກ່ຽວກັບບັນຫາຫຍຸ້ງຍາກຄົງຄ້າງຈຳນວນໜຶ່ງ.

ໃນຕອນ ທ້າຍກອງປະຊຸມ ຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ກໍໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ທີ່ໄດ້ຕັ້ງໜ້າປະຕິບັດໜ້າທີ່ດ້ວຍຄວາມຫ້າວຫັນ ເພື່ອໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້.

ໃນຕອນເຊົ້າຂອງ ວັນທີ 27 ພະຈິກຜ່ານມາ, ສະພາປະຊາຊົນ ນວ ໄດ້ດຳເນີນກອງປະຊຸມສຳມະນາ ຮ່າງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ລະບົບການບຳບັດນໍ້າເປື້ອນ ໃນນະຄອນຫຼວງວຽງຈັນ ໂດຍການເປັນປະທານຂອງທ່ານ ບຸນທານ ພຸດທະວົງສາ, ກຳມະການພັກ, ຮອງປະທານ ສະພາປະຊາຊົນ ນະຄອນຫຼວງວຽງຈັນ, ມີບັນດາທ່ານສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 1, ສະມາຊິກສະພາປະຊາຊົນນະຄອນຫຼວງ, ຄະນະຮັບຜິດຊອບ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການສະເໜີຫຍໍ້ ຈາກທ່ານ ສົມໃຈຫວັງ ເດດອຸດົມ ຮອງຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງ, ຫົວໜ້າກອງເລຂາ, ຕາງໜ້າຄະນະຮັບຜິດຊອບຮ່າງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ລະບົບການບຳບັດນໍ້າເປື້ອນ ໃນນະຄອນຫຼວງວຽງຈັນ ກ່ຽວກັບຄວາມຄືບໜ້າ, ເຫດຜົນ ແລະຄວາມຈຳເປັນໃນການຮ່າງຂໍ້ຕົກລົງດັ່ງກ່າວ ເຊິ່ງນະຄອນຫຼວງວຽງຈັນ ເປັນເມືອງຫຼວງຂອງ ສປປລາວ, ມີປະຊາກອນອາໄສຢູ່ຢ່າງໜ້າແໜ້ນ, ເສດຖະກິດ-ສັງຄົມ ໄດ້ຮັບການພັດທະນາ ແລະ ຂະຫຍາຍຕົວໄປຄຽງຄູ່ກັນເຊິ່ງເຮັດໃຫ້ມີສິ່ງເສດເຫຼືອຈາກການດຳລົງຊີວິດ, ການດຳເນີນທຸລະກິດ ແລະ ການຊົມໃຊ້ຕ່າງໆ ໂດຍສະເພາະແມ່ນເກີດມີນໍ້າເປື້ອນ ບວກກັບນໍ້າຖ້ວມຂັງ ແລະ ການລະບາຍນໍ້າເປື້ອນຂອງນະຄອນຫຼວງວຽງຈັນແມ່ນຍັງປ່ອຍເປັນໄປຕາມທຳມະຊາດ ຍັງບໍ່ທັນໄດ້ຮັບການບຳບັດ ເທົ່າທີ່ຄວນ, ສິ່ງເສດເຫຼືອທີ່ໄຫຼໄປກັບນໍ້າຝົນ ແລະ ນໍ້າເປື້ອນ ບໍ່ໄດ້ດຳເນີນການແຍກ, ສະກັດ ຫຼື ນຳມາໃຊ້ຄືນ ເພື່ອໃຫ້ເກີດປະໂຫຍດສູງສຸດ, ນອກນີ້, ການເພີ່ມຂຶ້ນຂອງປະລິມານນໍ້າຖ້ວມຂັງ ໃນລະດູຝົນ ແລະ ກິ່ນເໝັນຂອງນໍ້າເປື້ອນ ມີ ລັກສະນະຖີ່ຂຶ້ນສ້າງຜົນກະທົບທາງກົງແລະທາງອ້ອມ ຕໍ່ການດຳລົງຊີວິດຂອງປະຊາຊົນ, ການທ່ອງທ່ຽວ ແລະ ການພັດທະນາແບບຍືນຍົງຂອງນະຄອນຫຼວງວຽງຈັນ. ດ້ວຍເຫດນັ້ນ, ຈຶ່ງຈຳເປັນຈະຕ້ອງມີການສ້າງລະບົບລະບາຍນໍ້າແລະການບຳບັດນໍ້າເປື້ອນ ເພື່ອຫຼຸດຜ່ອນຜົນກະທົບ ຕໍ່ສັງຄົມ ແລະ ລະບົບນິເວດ,

ຫຼັງຈາກນັ້ນ, ບັນດາທ່ານ ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນ ກໍໄດ້ປະກອບຄຳຄິດຄຳເຫັນ ຢ່າງມີຈຸດສຸມ ຕໍ່ໂຄງສ້າງ ແລະ ເນື້ອໃນຂອງຮ່າງຂໍ້ຕົກລົງດັ່ງກ່າວ ເພື່ອໃຫ້ຄະນະຮັບຜິດຊອບໄດ້ນຳໄປຄົ້ນຄວ້າ, ປັບປຸງຄືນ ໃຫ້ມີເນື້ອໃນມີຄວາມສົມບູນຄົບຖ້ວນ ກ່ອນນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 10 ຂອງ ສະພາປະຊາຊົນ ນະຄອນຫຼວງວຽງຈັນ ຊຸດທີ IV.



# ສພຂ ຫົວພັນ ເຄື່ອນໄຫວວຽກງານຫຼາຍດ້ານ ແລະ ພົບປະປະຊາຊົນ



(ສພຂ) - ໃນລະຫ່ວາງວັນທີ 1-3 ຕຸລາຜ່ານມານີ້, ທ່ານ ສີຄຳ ບຸນມີໄຊ ຮອງປະທານ ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ, ປະທານ ຄະນະກຳມະການວັດທະນະທຳ, ສັງຄົມ ແລະ ບັນດາເຜົ່າສະພາປະຊາຊົນ ແຂວງຫົວພັນ ( ສພຂ ) ພ້ອມດ້ວຍທີມງານ ພະແນກສາທາລະນາສຸກແຂວງ ແລະ ຫ້ອງການ ສາທາເມືອງ ຊຳເໜືອ ໄດ້ລົງເຄື່ອນໄຫວຕິດຕາມກວດກາ ການສັກຢາ ແລະ ຍອດຢາກັນພະຍາດໃຫ້ເດັກກຸ່ມເປົ້າໝາຍ ຢູ່ເມືອງຊຳເໜືອ ມີ 3 ຈຸດ 3 ບ້ານຄື: ບ້ານກໍໄຮ, ບ້ານຫົວຄັງ ແລະ ບ້ານແກ່ວກວ້າງ.

ການເຄື່ອນໄຫວ ຕິດຕາມກວດກາຄັ້ງນີ້, ທ່ານ ສີຄຳ ບຸນມີໄຊ ໄດ້ພົບປະໂອ້ລົມປະຊາຊົນ ແລະ ຜູ້ປົກຄອງເດັກ ເຊິ່ງກ່ອນອື່ນ ທ່ານໄດ້ຍົກໃຫ້ເຫັນແນວທາງ ຂອງພັກ, ນະໂຍບາຍຂອງລັດ ທີ່ມີຕໍ່ປະຊາຊົນບັນດາເຜົ່າ ແລະ ອະທິບາຍຊີ້ແຈງ ຜົນໄດ້ຮັບຈາກການສັກວັກຊີນ ໃຫ້ເດັກໃນເກນອາຍຸ ໄດ້ຮັບຮູ້ແລະເຂົ້າໃຈ. ຈາກນັ້ນ, ທ່ານ ຍັງໄດ້ຮຽກຮ້ອງໃຫ້ພໍ່ແມ່ປະຊາຊົນ ແລະ ຜູ້ປົກຄອງເດັກ ຈົ່ງເອົາໃຈໃສ່ຍົກສູງຄວາມຮັບຜິດຊອບຂອງຕົນ ຮ່ວມມືກັບຂະແໜງການກ່ຽວຂ້ອງ ໃຫ້ນຳເອົາລູກຫຼານທີ່ນອນຢູ່ໃນກຸ່ມເປົ້າໝາຍ ໄດ້ຮັບການບໍລິການຄົບຕາມຈຳນວນ.

ແລະ ໃນວັນທີ 13 ຕຸລາຜ່ານມານີ້, ທ່ານ ສໍສະຫວັນ ບານຄຳມີ ຮັກສາການ ຫົວໜ້າຫ້ອງການຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ແຂວງຫົວພັນ ໄດ້ມອບເຄື່ອງກິລາໃຫ້ທີມນັກກິລາບານເຕະຊາຍ ຂອງສະພາປະຊາຊົນແຂວງຫົວພັນ ເຊິ່ງເຄື່ອງກິລາທີ່ນຳມາມອບໃນຄັ້ງນີ້ ແມ່ນໄດ້ມາຈາກການປະກອບສ່ວນ ອຸປະຖຳ ຂອງບໍລິສັດ ຢູເຊີນບໍ່ແຮ່ ຈຳກັດ ລວມມູນຄ່າ 3,300,000 ກີບ (ສາມລ້ານສາມແສນກີບ) ຈຳນວນເຄື່ອງດັ່ງກ່າວແມ່ນຈະໄດ້ນຳໃຊ້ເພື່ອເຂົ້າຮ່ວມແຂ່ງຂັນຂໍ່ານັບຮັບຕ້ອນກອງປະຊຸມໃຫຍ່ອົງຄະນະພັກ ແຂວງຫົວພັນ ຄັ້ງທີ XI ກ່າວຮັບໂດຍທ່ານ ປອ. ຄອນເສີດ ດອນວິໄຊ ເລຂາທິການສະພາປະຊາຊົນແຂວງ.

ໃນໂອກາດນີ້, ທ່ານຍັງໄດ້ ມອບໃບກຽດຕິຄຸນໃຫ້ບໍລິສັດ ພ້ອມທັງສະແດງຄວາມຂອບໃຈ ນຳທ່ານ ສໍສະຫວັນ ບານຄຳມີ ແລະ ບໍລິສັດດັ່ງກ່າວ ທີ່ໄດ້ໃຫ້ອຸປະຖຳ ແລະ ຊ່ວຍເຫຼືອ ສະພາປະຊາຊົນແຂວງກໍຄືທີມນັກກິລາບານເຕະ ຊາຍໃນຄັ້ງນີ້ໃຫ້ໄດ້ຮັບໄຊຊະນະຕາມຄາດໝາຍວາງໄວ້.

ໃນວັນດຽວກັນ, ທີ່ຫ້ອງປະຊຸມ ສະພາປະຊາຊົນ ແຂວງຫົວພັນໄດ້ຈັດກອງປະຊຸມເຊື່ອມຊຶມ ສູນທອນພົດ ຂອງສະຫາຍເລຂາທິການໃຫຍ່ ເນື່ອງໃນໂອກາດ ສະເຫຼີມສະຫຼອງ 70 ປີ ວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ໃຫ້ກຽດເປັນປະທານແລະເຜີຍແຜ່ເອກະສານໃນຄັ້ງນີ້ໂດຍສະຫາຍ ສົມສັກ ດອນຈານິດ ກຳມະການພັກແຂວງ, ເລຂາໜ່ວຍພັກ, ຮອງປະທານສະພາປະຊາຊົນແຂວງ ມີບັນດາສະຫາຍ ຄະນະປະຈຳ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ຕະຫຼອດຮອດພະນັກງານວິຊາການພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມທັງໝົດ.

ການຈັດກອງປະຊຸມເຊື່ອມຊຶມຄັ້ງນີ້, ເພື່ອເຮັດໃຫ້ສະມາຊິກພັກ, ພະນັກງານ-ລັດຖະກອນພາຍໃນ ໄດ້ຮັບຮູ້, ເຂົ້າໃຈຢ່າງເລິກເຊິ່ງກ່ຽວກັບມູນເຊື້ອຂອງພັກ, ເຂົ້າໃຈຕໍ່ພາລະກຳປະຫວັດສາດອັນຍິ່ງໃຫຍ່ຂອງພັກປະຊາຊົນປະຕິວັດລາວພ້ອມທັງສືບຕໍ່ພາລະກິດປະຕິວັດ ຂອງພັກເຮົາໃນຕໍ່ໜ້າ, ເປັນການຍົກສູງລະດັບຄວາມຮູ້, ຄວາມສາມາດ ແລະ ການກຳແໜ້ນແນວທາງຂອງພະນັກງານ ກໍຄືສະມາຊິກພັກ ເປັນພື້ນຖານ ໃນການປັບປຸງທັດສະນະ ແລະ ຄວາມເຊື້ອໝັ້ນໃນອຸດົມການ ແລະ ການນຳພາ ຂອງພັກເຮົາ

ຕອນທ້າຍ, ທ່ານ ສົມສັກດອນຈານິດຮຽກຮ້ອງແລະແນະນຳຕໍ່ພະນັກງານທັງໝົດທີ່ໄດ້ເຊື່ອມຊຶມໃນຄັ້ງນີ້ ຈົ່ງກຳແໜ້ນບັນດາເນື້ອໃນຕ່າງໆຂອງເອກະສານ ນຳເອົາເນື້ອໃນເອກະສານ ໄປໝູນໃຊ້ເຂົ້າໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານໃນຕໍ່ໜ້າໃຫ້ເກີດດອກອອກຜົນ ແລະ ປະກົດຜົນເປັນຈິງ.

ລະຫວ່າງວັນທີ 14-16 ຕຸລາຜ່ານມານີ້, ທ່ານ ປອ. ສະຖາບັນດິດ ອິນສີຊຽງໃໝ່ ຮອງປະທານ ສະຖາບັນວິທະຍາສາດເສດຖະກິດ ແລະ ສັງຄົມແຫ່ງຊາດ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ ໄດ້ລົງເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນ ເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ IX ຢູ່ເມືອງແອດ, ເມືອງວຽງໄຊແລະເມືອງຊຳເໜືອ ໄດ້ທັງໝົດ 4 ຈຸດ, ມີ 4 ບ້ານ ຄື: ບ້ານແຜ, ບ້ານໂສຍ, ບ້ານລອງເອືອດ ແລະ ບ້ານໂພນສະຫວ່າງ ມີຄະນະພັກກຸ່ມບ້ານ, ອຳນາດການປົກຄອງນຳມາເຜີຍ

ອ່ານຕໍ່ໜ້າ 7

# ພົບປະລະຫວ່າງຜູ້ແທນປະຊາຊົນກັບພາກລັດ ແລະ ພາກສ່ວນທຸລະກິດພາຍໃນແຂວງ



(ສພຂ) - ກອງປະຊຸມພົບປະລະຫວ່າງຜູ້ແທນປະຊາຊົນກັບພາກລັດ ແລະ ພາກສ່ວນທຸລະກິດ ພາຍໃນແຂວງ ໄດ້ຈັດຂຶ້ນໃນວັນທີ 28 ຕຸລາຜ່ານມາ ທີ່ສະພາປະຊາຊົນແຂວງ (ສພຂ) ບໍລິຄຳໄຊ ໂດຍການເປັນປະທານຮ່ວມຂອງທ່ານ ປອ. ສຸວັນນີ ໄຊຊະນະ ປະທານສະພາປະຊາຊົນແຂວງແລະທ່ານຄຳແຫວນ ປັນຍານຸວົງຮອງເລຂາພັກແຂວງ, ຮອງເຈົ້າແຂວງ ແຂວງບໍລິຄຳໄຊ; ມີບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ), ສະມາຊິກປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງ, ເລຂາພັກເມືອງ, ຫົວໜ້າພະແນກການຂອງແຂວງ, ປະທານສະພາການຄ້າ ແລະ ອຸດສາຫະກຳແຂວງ ພ້ອມດ້ວຍຄະນະ ແລະ ພາກສ່ວນທຸລະກິດເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການລາຍງານສະພາບລວມໃນການເຄື່ອນໄຫວວຽກງານ ຂອງສະພາການຄ້າ ແລະ ອຸດສາຫະກຳແຂວງ ຈາກທ່ານ ໄຊຍະເພັດ ຈັນທິສອນ ປະທານສະພາການຄ້າ ແລະ ອຸດສາຫະກຳ ແຂວງບໍລິຄຳໄຊ; ຈາກນັ້ນ, ໄດ້ຮັບຟັງການປະກອບຄຳເຫັນຈາກສະພາການຄ້າ ແລະ ອຸດສາຫະກຳເມືອງ; ຮອງປະທານສະພາການຄ້າ ແລະ ອຸດສາຫະກຳແຂວງ ທັງຮັບຟັງໃນການຊີ້ແຈງ, ອະທິບາຍ ຂອງພະແນກການກ່ຽວຂ້ອງຕໍ່ກັບເນື້ອໃນ ແລະ ບັນຫາທີ່ນຳມາຄົ້ນຄວ້າ, ປຶກສາຫາລື, ແລກປ່ຽນຄຳເຫັນຮ່ວມກັນເຊິ່ງຕິດພັນກັບການຈັດຕັ້ງປະຕິບັດ, ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ; ວາລະແຫ່ງຊາດວ່າດ້ວຍການແກ້ໄຂຂໍ້ຫຍຸ້ງຍາກທາງດ້ານເສດຖະກິດ-ສັງຄົມ ເຊິ່ງສາມາດຕີລາຄາໄດ້ດ້ານດີ, ດ້ານອ່ອນແລະບົດຮຽນທີ່ຖອດຖອນໄດ້ ເພື່ອຊອກຫາວິທີແກ້ໄຂຢ່າງຖືກຕ້ອງ ທັງເປັນບ່ອນອີງໃຫ້ແກ່ການຈັດຕັ້ງປະຕິບັດວຽກງານໃນຕໍ່ໜ້າ.

**(ໂສລະຢ່າ)**



# ມອບອຸປະກອນສ້ອມແປງໂຮງຮຽນ



(ສພຂ) - ວັນທີ 5 ພະຈິກຜ່ານມາ, ທ່ານ ເລື່ອນວິໄລ ຈັນທະລາພັນ ຮອງປະທານສະພາປະຊາຊົນແຂວງບໍລິຄຳໄຊ ໄດ້ນຳເອົາສັງກະສີ 350 ແຜ່ນ ມູນຄ່າ 17 ລ້ານກວ່າກີບ ມອບໃຫ້ແກ່ໂຮງຮຽນປະຖົມສົມບູນບົວແວງຄຳເພື່ອໝູນໃຊ້ເຂົ້າໃນການສ້ອມແປງໂຮງຮຽນ ຕາງໜ້າຮັບໂດຍ ຄະນະບ້ານບົວແວງຄຳ ໂດຍມີພາກສ່ວນກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພະຍານ.

**(ລະອອງດາວ)**

# ກອງປະຊຸມສະໄໝວິສາມັນເທື່ອທີ 3 ສະພາປະຊາຊົນແຂວງບໍລິຄຳໄຊ ຊຸດທີ IV




(ສພຂ) - ກອງປະຊຸມສະໄໝວິສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວງ (ສພຂ) ບໍລິຄຳໄຊ ຊຸດທີ IV ໄດ້ດຳເນີນໃນວັນທີ 29 ຕຸລາຜ່ານມາ ທີ່ ສພຂ ບໍລິຄຳໄຊ ໂດຍການເປັນປະທານຂອງທ່ານ ປອ. ສຸວັນນີ ໄຊຊະນະ ປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມມີທ່ານ ສອນທະນູທຳມະວົງກຳມະການສູນກາງພັກ, ເລຂາພັກແຂວງ, ເຈົ້າແຂວງບໍລິຄຳໄຊ; ມີສະມາຊິກສະພາແຫ່ງຊາດ(ສສຊ), ສະມາຊິກສະພາປະຊາຊົນແຂວງ (ສສຂ) ພ້ອມດ້ວຍການນຳພັກ-ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ ແລະ ແຂກຖືກເຊີນເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ສຸມໃສ່ຄົ້ນຄວ້າ, ປະກອບຄຳເຫັນ ແລະ ພິຈາລະນາຮັບຮອງເອົາການປັບປຸງກົງຈັກການຈັດຕັ້ງຂອງແຂວງ ໂດຍໄດ້ພິຈາລະນາ, ຮັບຮອງການແຕ່ງຕັ້ງ:

1. ທ່ານ ຄຳແຫວນ ປັນຍານຸວົງ ເປັນປະທານຄະນະກຳມະການປົກຄອງແຂວງ;

2. ທ່ານ ບຸນລ້ຽງ ດວງສະເພົາທອງ ເປັນຮອງປະທານຄະນະກຳມະການປົກຄອງແຂວງ;

3. ທ່ານ ສົມໃຈ ຄຸນພະໄຊ ເປັນຮອງປະທານຄະນະກຳມະການປົກຄອງແຂວງ;

4. ທ່ານ ພົຈວ ຄຳແພນວິລື້ທຳ ເປັນຄະນະກຳມະການປົກຄອງແຂວງ ຫົວໜ້າການທະຫານ ກອງບັນຊາການທະຫານແຂວງ;

5. ທ່ານ ພົຈວ ກົງຈັນໄຊປັນຍາເປັນຄະນະກຳມະການປົກຄອງແຂວງຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບແຂວງ;

6. ທ່ານທອງມະນີໂຄດປັນຍາ ເປັນຄະນະກຳມະການປົກຄອງແຂວງຫົວໜ້າຫ້ອງວ່າການແຂວງ;

7. ທ່ານ ສິນທອງ ວິບຸນກວ້າງເປັນຄະນະກຳມະການປົກຄອງແຂວງ ຫົວໜ້າພະແນກຍຸຕິທຳແຂວງ;

8. ທ່ານ ລົມ ແພງສຸກ ເປັນຄະນະກຳມະການປົກຄອງແຂວງ ຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ;

9. ທ່ານ ອຸດົມ ວົງໄກສອນເປັນຄະນະກຳມະການປົກຄອງແຂວງ ຫົວໜ້າພະແນກວັດທະນະທຳ ແລະ ການທ່ອງທ່ຽວແຂວງ;

10. ທ່ານ ສອນໄຊ ປັນຍານຸວົງ ເປັນຄະນະກຳມະການປົກຄອງແຂວງຫົວໜ້າພະແນກສາທາລະນະສຸກແຂວງ;

11. ທ່ານ ພັນແສງ ວິພາວັນ ເປັນຄະນະກຳມະການປົກຄອງແຂວງຫົວໜ້າພະແນກການເງິນແຂວງ;

12. ທ່ານ ໂພຄຳ ຈັນທະສຸກ ເປັນຄະນະກຳມະການປົກຄອງແຂວງຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ

13. ທ່ານຄອນສະຫວັນ ສຸກຂະເສີມ ເປັນຄະນະກຳມະການປົກຄອງແຂວງຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ;

14. ທ່ານ ວິໄຊ ພູມີ ເປັນຄະນະກຳມະການປົກຄອງແຂວງ ຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງແຂວງ;

15. ທ່ານ ໂກ່ ໄຊສົມບັດ ເປັນຄະນະກຳມະການປົກຄອງແຂວງ ຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ.

ພ້ອມນັ້ນ, ຍັງໄດ້ພິຈາລະນາ,ຮັບຮອງເອົາຮ່າງຂໍ້ຕົກລົງຂອງປະທານຄະນະກຳມະການປົກຄອງແຂວງ ວ່າດ້ວຍການປະເມີນລາຄາທີ່ດິນ ເພື່ອເປັນພື້ນຖານຄິດໄລ່ອາກອນທີ່ດິນພາຍໃນແຂວງ ແລະ ຮ່າງຂໍ້ຕົກລົງຂອງປະທານຄະນະກຳມະການປົກຄອງແຂວງ ວ່າດ້ວຍການຄຸ້ມຄອງການນຳໃຊ້ທີ່ດິນຜັງເມືອງ ເທສະບານເມືອງປາກຊັນ ແຂວງບໍລິຄຳໄຊ ພາຍໃຕ້ໂຄງການພັດທະນາຕົວເມືອງຕາມແລວອະນຸພາກພື້ນແມ່ນ້ຳຂອງ 4(GMS4)ຕົວເມືອງປາກຊັນ.

**(ໂສລະຢ່າ- ລະອອງດາວ)**



# ປຶກສາຫາລື ແລະ ຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍຂົງເຂດວັດທະນະທຳ-ສັງຄົມ



(ສພຂ) - ວັນທີ 28 ຕຸລາຜ່ານມາທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ສາລະວັນ ໄດ້ມີກອງປະຊຸມປຶກສາຫາລື ແລະ ຕິດຕາມກວດກາການຈັດຕັ້ງປະຕິບັດບັນດາກົດໝາຍຂົງເຂດວັດທະນະທຳ-ສັງຄົມ ແລະບັນດາເຜົ່າຕາມມະຕິທີ່ສະພາຮັບຮອງ ໂດຍການເປັນປະທານຂອງທ່ານ ນາງ ສູນໄຖ ໄຊຍະແສງ ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມມີປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ, ຕາງໜ້າຈາກບັນດາພະແນກການອ້ອມຂ້າງແຂວງ ຂົງເຂດວັດທະນະທຳ-ສັງຄົມ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການຜ່ານບົດສະຫຼຸບການເຄື່ອນໄຫວວຽກງານ ປະຈຳ 9 ເດືອນ ແລະ ທິດທາງແຜນການ 3 ເດືອນທ້າຍປີ 2025 ຂອງຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ທັງປຶກສາຫາລືແລະຮ່າງຂໍ້ຕົກລົງວ່າດ້ວຍການປະສານງານ ແລະ ຮ່າງນິຕິກຳໃຕ້ກົດໝາຍໄລຍະ 5 ປີ (2026-2030) ຂອງອົງການປົກຄອງແຂວງ; ຈາກນັ້ນ, ບັນດາພະແນກການທີ່ກ່ຽວຂ້ອງໄດ້ລາຍງານການຈັດຕັ້ງປະຕິບັດບັນດາກົດໝາຍຕ່າງໆໃນຂົງເຂດວັດທະນະທຳ-ສັງຄົມ ເປັນຕົ້ນ: ພະແນກສຶກສາ ແລະ ກິລາແຂວງ ໄດ້ລາຍງານຕົວເລກການເຂົ້າໂຮງຮຽນໃນສົກປີ 2025-2026,ການປະຕິບັດຄຳສັ່ງແນະນຳເລກທີ 09/ລບ, ການປະຕິຮູບລະບົບການສຶກສາລະບົບ 6+3+3; ພະແນກແຮງງານລາຍງານການຄຸ້ມຄອງແຮງງານພາຍໃນແລະຕ່າງປະເທດ,ການຄຸ້ມຄອງກອງທຶນປະກັນສັງຄົມ; ພະແນກວັດທະນະທຳແລະທ່ອງທ່ຽວ ລາຍງານການແຮ່ພະໄຕປິດົກ, ພິທີສະເຫຼີມສະຫຼອງສອງວັນປະຫວັດສາດແລະວຽກງານທ່ອງທ່ຽວ; ພະແນກສາທາລະນະສຸກ ລາຍງານການຈັດຕັ້ງປະຕິບັດບັນດາກົດໝາຍຂົງເຂດສາທາລະນະສຸກ; ຄະນະຈັດຕັ້ງແຂວງ ລາຍງານການຈັດຕັ້ງປະຕິບັດມະຕິ 25/ກມສພ, ລົງວັນທີ 22 ທັນວາ 2014, ມະຕິທີ່ສະພາຮັບຮອງໃນໄລຍະ 1 ປີ (2025); ພະແນກກະສິກຳແລະສິ່ງແວດລ້ອມລາຍງານການຈັດຕັ້ງປະຕິບັດດຳລັດເລກທີ 348/ລບ ແລະ ມະຕິທີ່ສະພາຮັບຮອງໃນໄລຍະ 1 ປີ (2025); ພະແນກການຕ່າງປະເທດລາຍງານການຄຸ້ມຄອງອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ (NGO) ຢູ່ແຂວງສາລະວັນ; ແນວລາວສ້າງຊາດແຂວງ ລາຍງານວຽກງານການປົກປ້ອງ ແລະ ເຄື່ອນໄຫວສາສະໜາ ຢູ່ແຂວງສາລະວັນໂດຍສະເພາະຢູ່ເມືອງຕະໂອ້ຍ (ບ້ານຕຸ້ມລີທົ່ງ) ເພື່ອເປັນຂໍ້ມູນທີ່ສຳຄັນໃຫ້ແກ່ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 14 ແຂວງສາລະວັນ ທີ່ຈະນຳສະເໜີຄົ້ນຄວ້າພິຈາລະນາຕໍ່ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ.

**(ຈັນທີ ດວງປັນຍາ)**

## ສພຂ...

(ຕໍ່ຈາກໜ້າ 5)

ແຜ່ ເພື່ອເຮັດໃຫ້ ພໍ່ແມ່ປະຊາຊົນຜູ້ທີ່ມີສິດເລືອກຕັ້ງເຂົ້າຮ່ວມເຊິ່ງຈຸດະສິ່ງການນຳເອົາເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ IX ລົງເຜີຍແຜ່ໃນຄັ້ງນີ້ແມ່ນເພື່ອໃຫ້ຜູ້ມີສິດເລືອກຕັ້ງໄດ້ຮັບຮູ້ ແລະ ເຂົ້າໃຈຕໍ່ແນວທາງນະໂຍບາຍຂອງພັກ ລະບຽບກົດໝາຍ ຂອງລັດ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຢ່າງເລິກເຊິ່ງ. ຈາກນັ້ນ, ໄດ້ເປີດໂອກາດໃຫ້ຜູ້ທີ່ເຂົ້າຮ່ວມ ໄດ້ມີຄຳເຫັນແລກປ່ຽນ ແລະ ບາງຂໍ້ສະເໜີທີ່ຍັງມີຄວາມສົນໃຈ ທີ່ຕິດພັນກັບການດຳລົງຊີວິດ ຂອງພໍ່ແມ່ປະຊາຊົນບັນດາເຜົ່າ ທີ່ຍັງພົບຄວາມຫຍຸ້ງຍາກ ເພື່ອເປັນຂໍ້ມູນນຳສະເໜີຂັ້ນເທິງ ຄົ້ນຄວ້າ, ພິຈາລະນາ ແລະ ປະສານສົມທົບນຳພາກສ່ວນທີ່ກ່ຽວຂ້ອງພິຈາລະນາແກ້ ໄຂຕາມສິດພາລະບົດບາຂອງຕົນ; ພ້ອມນີ້ທ່ານ ກໍໄດ້ມີຄຳເຫັນອະທິບາຍ, ຊີ້ແຈງໃຫ້ພໍ່ແມ່ປະຊາຊົນໄດ້ຮັບຮູ້ເຂົ້າໃຈຕໍ່ກັບສະພາບຄວາມຫຍຸ້ງຍາກທາງດ້ານເສດຖະກິດຂອງປະເທດເຮົາ ເວົ້າລວມ ແລະ ໃນນີ້, ທ່ານຍັງໄດ້ເນັ້ນໜັກ ບາງບັນຫາສຳຄັນໃຫ້ພໍ່ແມ່ພີ່ນ້ອງປະຊາຊົນກໍຄື ຜູ້ມີສິດເລືອກຕັ້ງໄດ້ເອົາໃຈໃສ່ຕື່ມ ເປັນຕົ້ນ ເພີ່ມທະວີການເຕົ້າໂຮມຄວາມສາມັກຄີ, ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ຕ້ານ ແລະ ສະກັດປາກົດການຫຍໍ້ທໍ້ຕ່າງໆ, ເນັ້ນໜັກໃຫ້ພໍ່ແມ່ຜູ້ປົກຄອງໄດ້ຮັບຮູ້ ເຂົ້າໃຈເຖິງວຽກງານການສຶກສາ ສົ່ງເສີມລູກຫຼານໄດ້ເຂົ້າໂຮງຮຽນຕາມເກນອາຍຸ, ຊຸກຍູ້ການຜະລິດເປັນສິນຄ້າເປັນຕົ້ນການປູກ, ການລ້ຽງການຜະລິດໃດທີ່ເປັນທ່າແຮງຂອງບ້ານ ຜະລິດເປັນສິນຄ້າສົ່ງ ອອກພາຍໃນ ແລະ ຕ່າງປະເທດ ເພື່ອເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນດີນັບມື້ດີຂຶ້ນ.

ການເຄື່ອນໄຫວຄັ້ງນີ້, ທ່ານຍັງໄດ້ນຳເອົາ ເຄື່ອງອຸປະໂພກ, ບໍລິໂພກ ຈຳນວນໜຶ່ງລວມເປັນມູນ 25,000,0000 ກີບມອບໃຫ້ຄະນະພັກກຸ່ມບ້ານ, ຄອບຄົວທີ່ຖືກຜົນກະທົບຈາກພາຍຸບົວລອຍຜ່ານມາ, ຄອບຄົວທຸກຍາກ ແລະ ນ້ອງນັກຮຽນທີ່ຢູ່ເຂດຫ່າງໄກຈາກໂຮງຮຽນ.

**(ສພຂ ທິວພັນ)**



## ຄປຈສພຊ...

(ຕໍ່ຈາກໜ້າ 1)

(ສພຊ) - ກອງປະຊຸມຮ່ວມລະຫວ່າງຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ) ກັບອົງການກວດກາແຫ່ງລັດ ແລະ ອົງການກວດສອບແຫ່ງລັດ ໄດ້ດຳເນີນໃນຕອນບ່າຍວັນທີ 28 ຕຸລາຜ່ານມາ ທີ່ ສພຊ ພາຍໃຕ້ການເປັນປະທານຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານຄະນະປະຈຳສະພາແຫ່ງຊາດ, ເຂົ້າຮ່ວມມີບັນດາທ່ານໃນ ຄປຈສພຊ, ຮອງລັດຖະມົນຕີກະຊວງການເງິນ, ຮອງປະທານອົງການກວດກາແຫ່ງລັດ, ຮອງປະທານອົງການກວດສອບແຫ່ງລັດ, ຜູ້ຕາງໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ແລະ ແຂກຖືກເຊີນ.

ທ່ານ ປອ. ນາງ ສູນທອນ ໄຊຍະຈັກກ່າວວ່າ: ອົງການກວດກາແຫ່ງລັດ ແລະ ອົງການກວດສອບແຫ່ງລັດ ໄດ້ມີຄວາມພະຍາຍາມໃນການຈັດຕັ້ງແຜນການເຄື່ອນໄຫວຕາມພາລະບົດບາດຂອງຕົນ, ເປັນເຈົ້າການປະສານສົມທົບ, ຊຸກຍູ້ເປົ້າໝາຍ, ການຄຸ້ມຄອງເປົ້າໝາຍກວດສອບໃຫ້ໄດ້ຮັບການແກ້ໄຂຕາມຜົນການກວດສອບ ພ້ອມທັງໄຈ້ແຍກໃຫ້ເຫັນອັນໃດທີ່ສາມາດແກ້ໄຂໄດ້, ອັນໃດເປັນໜີ້ທວງຍາກ ແລະ ອັນໃດທີ່ບໍ່ສາມາດແກ້ໄຂໄດ້ ຫຼື ບໍ່ມີຕົວຕົນ; ພ້ອມກັນນັ້ນ, ຍັງກວດກາການຢັ້ງຢືນຄວາມຖືກຕ້ອງຂອງເອກະສານລາຍງານການເງິນ, ຄວາມສອດຄ່ອງທາງດ້ານກົດໝາຍ ແລະ ຜົນການຈັດຕັ້ງປະຕິບັດ ລວມທັງການກວດກາຕາມຜົນການກວດສອບແນໃສ່ເຮັດໃຫ້ການນຳໃຊ້ງົບປະມານ, ການເງິນແລະຊັບສິນຂອງລັດ ຖືກຕ້ອງຕາມກົດໝາຍ.

ກອງປະຊຸມໄດ້ຮັບຟັງການລາຍງານການແກ້ໄຂຜົນການກວດກາຂອງອົງການກວດກາແຫ່ງລັດ ໃນໄລຍະ 5 ປີຜ່ານມາ (2021-2025) ແລະ ການແກ້ໄຂຜົນການກວດສອບຂອງອົງການກວດສອບແຫ່ງລັດ ໃນໄລຍະ 5 ປີຜ່ານມາ (2021-2025); ຈາກນັ້ນ, ໄດ້ພ້ອມກັນຄົ້ນຄວ້າ, ປະກອບຄຳເຫັນ, ພິຈາລະນາດ້ວຍເຫດດ້ວຍຜົນເພື່ອສ້າງຄວາມເປັນເອກະພາບກ່ຽວກັບວິທີການແກ້ໄຂວຽກງານໃນຕໍ່ໜ້າ ໃຫ້ມີບາດກ້າວຫັນປ່ຽນທີ່ດີຂຶ້ນ.

**(ນາງ ອາລິນ ສຸພົມມະປະດິດ)**



## ສະພາແຫ່ງຊາດ...

(ຕໍ່ຈາກໜ້າ 1)

ເດັດພຣະນາງເຈົ້າສິຣິກິດ ພຣະບໍລົມຊີນີນາດ ພຣະບໍລົມຣາຊະຊົນນະນີພັນປີຫຼວງ ໃນຣາຊະການທີ IX ໄດ້ເຖິງແກ່ສະຫວັນນະຄົດໃນວັນທີ24ຕຸລາ2025 ລວມພຣະຊົນມາຍຸໄດ້ 93 ປີ. ພວກຂ້າພະເຈົ້າ ເຊື່ອໝັ້ນຢ່າງໜັກແໜ້ນວ່າ ລາຊະອານາຈັກໄທ ແລະ ປະຊາຊົນໄທ ຈະຫັນເອົາຄວາມໂສກເສົ້າເສຍດາຍນີ້ເປັນເຫງື່ອພະລັງຄວາມສາມັກຄີທົ່ວປວງຊົນທັງຊາດ ຈະສືບຕໍ່ພັດທະນາປະເທດຊາດ ໃຫ້ມີຄວາມຈະເລີນຮຸ່ງເຮືອງ. ໃນເວລາແຫ່ງຄວາມໂສກເສົ້າເສຍດາຍນີ້, ພວກຂ້າພະເຈົ້າ ຂໍແບ່ງເບົາຄວາມທຸກໂສກເສຍໃຈ, ຄວາມອາໄລອາວອນຢ່າງສຸດຊຶ້ງຮ່ວມກັບພະບໍລົມວົງສານຸວົງທຸກພະອົງ, ລັດຖະບານ, ລັດຖະສະພາ ແລະ ປະຊາຊົນໄທ ມານະທີ່ນີ້ດ້ວຍ. ຂໍໃຫ້ດວງວິນຍານຂອງສົມເດັດພຣະນາງເຈົ້າສິຣິກິດ ພຣະບໍລົມຊີນີນາດ ພຣະບໍລົມຣາຊະຊົນນະນີພັນປີຫຼວງ ຈົ່ງໄປສູ່ສຸຄະຕິດ້ວຍເຖີ້ນ.

**(ກຸກກິກ ບຸດດາໄຊ)**




# ເລື່ອງລາງວັນ

**# ດົ້ນກົບເມກ**

ການເຮັດວຽກແນ່ນອນທຸກຄົນກໍຢາກໄດ້ລາງວັນ, ຢາກໄດ້ໃບຍ້ອງຍໍ ແຕ່ພຶດຕິກຳສ້າງຜົນງານເຮັດວຽກຕົວຈິງຜູ້ມີຜົນງານ ຈະຕີຄວາມເລືອກເອົາແບບໃດ? ຫຼື ພຽງແຕ່ຈະແຂ່ງຂັນກັນປະກອບເອກະສານຂຽນສະເໜີເອົາໃບຍ້ອງຍໍ-ເອົາຫຼຽນແຕ່ເປົ່າແປນດ້ານຄຸນຄ່າທາງຈິດໃຈ ເພາະທຳມະຊາດມະນຸດໃຜກໍຢາກຖືກຍ້ອງ-ໃຜກໍຢາກໄດ້ໜ້າ ເຊິ່ງອາດທຽບໄດ້ໃສ່ຕຳແໜ່ງວິຊາການຂອງບາງອາຊີບຫຼາຍຄົນກໍຢາກໄດ້ຍື້ແຍ່ງແຂ່ງຂັນປະກອບເອກະສານ, ບາງເອກະສານບໍ່ໄດ້ຄຸນນະພາບກໍໃຫ້ລູກນ້ອງເຊັນຮັບຮອງໃຫ້ ເພາະເວລາໄດ້ຕຳແໜ່ງວິຊາການ ເປີເຊັນເງິນເດືອນເພີ່ມຂຶ້ນ.

ຂໍ້ໜ້າຄິດ-ໜ້າສັງເກດ ຖ້າວ່າມຸ່ງແຕ່ເອົາຕຳແໜ່ງວິຊາການ ແຕ່ບໍ່ມີກົນໄກ-ບໍ່ມີລະບົບສ້າງນັກວິຊາການໃຫ້ເກັ່ງດ້ານວິຊາການ, ມີພະນັກງານຂີດຂຽນ-ສິດສອນທີ່ສັງຄົມຍອມຮັບ ກໍອາດເປັນພຽງເອົາຕຳແໜ່ງວິຊາການເພື່ອເຫັນຕົວເລກເງິນເດືອນເພີ່ມຂຶ້ນ; ທີ່ເວົ້າມານີ້ບໍ່ໄດ້ເໝົາລວມ ເພາະສັງເກດເຫັນວ່າບາງທ່ານກໍໄດ້ມາດ້ວຍສີມື-ຜົນງານດີ, ແຕ່ມີບາງກຸ່ມຄົນບໍ່ໄດ້ສ້າງງານຂຽນ-ຕຳລາທີ່ສັງຄົມຍອມຮັບໄດ້ຄຸນນະພາບ ເວລາພວກເຮົາໄປປະຊຸມຮ່ວມມິດຕຶງ ຈຶ່ງປາກົດມີຜູ້ໃຫຍ່ບາງທ່ານ ສະແດງຄຳເຫັນວ່າ ມີແຕ່ພວກຈົບສູງໆ ຕຳແໜ່ງວິຊາການກໍສູງ ແຕ່ເປັນຫຍັງບັນຫາກ່ຽວຂ້ອງຈຶ່ງເພີ່ມຂຶ້ນ, ສະແດງວ່າແກ້ບໍ່ເປັນແກ້ບໍ່ໄດ້.

ດັ່ງນັ້ນ, ຜ່ານມາຫຼາຍທ່ານກໍອາດເຄີຍໄດ້ຍິນຄຳວ່າລາຍງານດອກໄມ້, ບາດນີ້ເຮົາໄດ້ຍິນວ່າປະລິນຍາສູງໆ-ຕຳແໜ່ງວິຊາການສູງຢ່າງຕຳກັນ ແຕ່ຍັງບໍ່ສາມາດແກ້ບັນຫາໄດ້ ເພາະຢ່າລືມວ່າຄວາມຮູ້ຢູ່ທີ່ສະໝອງຄົ້ນຄວ້າຝຶກຝົນ, ຖ່ອມຕົນອ່ອນນ້ອມເຮັດແທ້; ແຕ່ພວກປະເພດນີ້ ເວົ້າໜ້ອຍ, ບໍ່ເກັ່ງສະແດງໂຕດ້ວຍການຕີສີປາກ.

ເລື່ອງໃບຍ້ອງຍໍ-ການເລື່ອນຊັ້ນ-ຂຶ້ນເງິນເດືອນ ແນ່ນອນທຸກຄົນຄືຢາກໄດ້ຄືກັນໝົດ ແຕ່ວິທີການ-ຄວາມຄິດຈະໄດ້ມາຕ່າງກັນ ເພາະບາງຄົນເຂົາຢາກໄດ້ເພາະສີມືແທ້ຈິງໄດ້ມາຢ່າງສົມສັກສີ, ແຕ່ບາງຄົນເກັ່ງເລື່ອງປະກອບເອກະສານສະເໜີເອົາທຸກຂັ້ນ ທຸກຄັ້ງມັນຈຶ່ງຕ່າງກັນນໍ! ສະເໜີເປັນຂໍ້ຄິດ.





## ກປຊສ...

(ຕໍ່ຈາກໜ້າ 1)

ກັດ ກປຊສ, ຮອງລັດຖະມົນຕີກະຊວງປ້ອງກັນປະເທດ, ຮອງລັດຖະມົນຕີກະຊວງປ້ອງກັນສະຫງົບ, ຮອງປະທານສະຫະພັນນັກຮົບເກົ່າລາວ, ຫົວໜ້າຫ້ອງການຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ປກຊ-ປກສ) ສູນກາງ, ຕາງໜ້າກອງບັນຊາການທະຫານນະຄອນຫຼວງວຽງຈັນ ແລະ ກອງບັນຊາການປ້ອງກັນຄວາມສະຫງົບນະຄອນຫຼວງວຽງຈັນ ພ້ອມດ້ວຍຄະນະກົມ, ຄະນະພະແນກ ແລະພະນັກງານຈາກພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງບົດສະຫຼຸບການເຄື່ອນໄຫວວຽກງານ 5 ປີ (2021-2025), ປະຈຳປີ 2025 ແລະ ແຜນການຮອດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X; ລາຍງານກ່ຽວກັບຜົນໄດ້ຮັບ ແລະ ບົດຮຽນທີ່ຖອດຖອນໄດ້ໃນການຈັດຕັ້ງປະຕິບັດວຽກງານກໍ່ສ້າງຮາກຖານການເມືອງຕິດພັນກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບຂອງກຳລັງ ປກຊ; ລາຍງານກ່ຽວກັບມາດຕະການສະກັດກັ້ນ ແລະ ການແກ້ໄຂປາກົດການຫຍໍ້ທໍ້ທີ່ເກີດຂຶ້ນໃນສັງຄົມປັດຈຸບັນ ເປັນຕົ້ນ: ບັນຫາຢາເສບຕິດ, ການປຸ້ນຈີ້, ຊິງຊັບ, ຄາດຕະກຳ, ຄ້າມະນຸດ, ສໍ້ໂກງຊັບ, ທາງສຽງວິພາກວິຈານທາງບໍ່ດີຕາມສື່ອອນລາຍທີ່ພົວພັນເຖິງການປະຕິບັດໜ້າທີ່ຂອງກຳລັງ ປກສ; ລາຍງານການຍົກສູງບົດບາດຂອງນັກຮົບເກົ່າ ໃນການເປັນແບບຢ່າງຮັກສາແລະເສີມຂະຫຍາຍທາດແທ້ມູນເຊື້ອອັນດີງາມຂອງພັກ, ຂອງກຳລັງປະກອບອາວຸດປະຕິວັດຕິດພັນກັບວຽກງານປກຊ-ປກສ ທົ່ວປວງຊົນຮອບດ້ານ. ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ພ້ອມຄົ້ນຄວ້າ, ປຶກສາຫາລືຮ່ວມກັນເພື່ອຕີລາຄາບັນຫາທີ່ຕັ້ງຂຶ້ນໃຫ້ຊັດເຈນ ແລະ ເພື່ອວາງມາດຕະການແກ້ໄຂໃຫ້ຖືກຕ້ອງ ໂດຍຄົ້ນຄວ້າສ້າງເປັນມະຕິແລະຮັບຮອງເອົາໃນກອງປະຊຸມຄົບຄະນະຢ່າງເປັນເອກະສັນ.

ທ່ານ ພົທ. ສຸວອນ ເລືອງບຸນມີ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທີ່ເອົາໃຈໃສ່ປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນໃນການເປັນເສນາທິການໃຫ້ແກ່ສະພາແຫ່ງຊາດ ກໍຄືຄະນະປະຈຳສະພາແຫ່ງຊາດ ຈັດຕັ້ງປະຕິບັດ 3 ພາລະບົດບາດ; ສະແດງຄວາມຊົມເຊີຍຕໍ່ວຽກງານທີ່ຜູ້ຕາງໜ້າກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ ແລະ ສະຫະພັນນັກຮົບເກົ່າລາວ ໄດ້ລາຍງານ. ພ້ອມນັ້ນ, ກໍໄດ້ເນັ້ນໜັກໃຫ້ເພີ່ມທະວີການຊີ້ນຳ-ນຳພາຢ່າງຮອບດ້ານໃນການສ້າງເງື່ອນໄຂ ກໍຄືສິ່ງອຳນວຍຄວາມສະດວກຕ່າງໆ ເພື່ອເຮັດໃຫ້ກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຄະນະກຳມະການ ປກຊ-ປກສ ແລະ ຍຸຕິທຳ ຂອງສະພາປະຊາຊົນຂັ້ນແຂວງ ມີຄວາມເຂັ້ມແຂງທາງດ້ານການຈັດຕັ້ງ ແລະ ມີຄວາມຊຳນານ, ສາມາດເຮັດລ້ອນໜ້າທີ່ໃນການເປັນເສນາທິການໄດ້ຢ່າງມີຄຸນນະພາບ ແລະ ປະສິດທິຜົນສູງ; ເອົາໃຈໃສ່ປະກອບບຸກຄະລາກອນທີ່ມີຄຸນນະພາບ ທັງຈັດຕັ້ງປະຕິບັດນະໂຍບາຍຕາມກົດໝາຍ ແລະ ລະບຽບຂອງ 2 ກຳລັງ; ຄັດເລືອກບຸກຄະລາກອນເພື່ອລົງສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ແຕ່ຫົວທີ; ສ້າງນິຕິກຳສະເພາະ ເພື່ອຈັດຕັ້ງປະຕິບັດເປັນເອກະພາບໃນການປະຕິບັດນະໂຍບາຍຕໍ່ພະນັກງານນັກຮົບທີ່ມາປະຈຳການຢູ່ສະພາ ຕ້ອງໄດ້ກຳນົດຢ່າງລະອຽດຈະແຈ້ງ.

**(ນາງ ກຸກກິກ ບຸດດາໄຊ)**

## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ສະເຫຼີມໄຊ ກົມມະສິດ ຮອງນາຍົກລັດຖະມົນຕີ, ມີບັນດາທ່ານຮອງປະທານ ແລະ ກຳມະການຄະນະປະຈຳສະພາແຫ່ງຊາດ, ສະມາຊິກລັດຖະບານ, ປະທານອົງການກວດສອບແຫ່ງລັດ, ຮອງປະທານອົງການກວດກາແຫ່ງລັດ ແລະ ແຂກຖືກເຊີນ ເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານປອ. ນາງສູນທອນ ໄຊຍະຈັກ ກ່າວວ່າ: ການດຳເນີນກອງປະຊຸມຮ່ວມເທື່ອນີ້ ຄະນະປະຈຳສະພາແຫ່ງຊາດ ແລະ ຄະນະລັດຖະບານ ໄດ້ສຸມໃສ່ປຶກສາຫາລືບັນຫາເຄັ່ງຮ້ອນ ແລະ ຮີບດ່ວນຂອງສັງຄົມເພື່ອໃຫ້ມີຄວາມເປັນເອກະພາບຕໍ່ວິທີການແກ້ໄຂບັນຫາຕ່າງໆ ໂດຍສະເພາະການແກ້ໄຂບັນຫາເສດຖະກິດ-ການເງິນ ພ້ອມກັນຊອກຫາວິທີທາງປັບປຸງແກ້ໄຂຢ່າງມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ເຮັດໃຫ້ປະເທດຊາດ ສືບຕໍ່ມີສະຖຽນລະພາບທາງດ້ານການເມືອງທີ່ໜັກແໜ້ນ, ສັງຄົມມີຄວາມສະຫງົບ, ເສດຖະກິດມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ໄດ້ຮັບການປັບປຸງໃຫ້ນັບມື້ດີຂຶ້ນ.

ກອງປະຊຸມໄດ້ສຸມໃສ່ປຶກສາຫາລືການຈັດຕັ້ງປະຕິບັດວຽກງານການເຊົ່າ ແລະ ສຳປະທານທີ່ດິນຂອງບັນດາໂຄງການລົງທຶນໃນຂອບເຂດທົ່ວປະເທດທີ່ໄດ້ຮັບການອະນຸມັດຜ່ານມາ ມີດ້ານດີ, ດ້ານຕັ້ງໜ້າແລະທິດທາງໃນການຈັດຕັ້ງປະຕິບັດໃນຕໍ່ໜ້າແລະການຈັດຕັ້ງປະຕິບັດວຽກງານການຂຶ້ນທະບຽນອອກໃບຕາດິນໃນຂອບເຂດທົ່ວປະເທດ ລວມທັງການຈັດຕັ້ງປະຕິບັດມະຕິຂອງຄະນະປະຈຳສະພາແຫ່ງຊາດວ່າດ້ວຍການພິຈາລະນາຮັບຮອງການຮັບຮູ້ສິດນຳໃຊ້ທີ່ດິນໃນຂອບເຂດທີ່ດິນປ່າໄມ້ ສະບັບເລກທີ 57/ຄປຈ, ລົງວັນທີ 31 ພຶດສະພາ 2024; ການປະເມີນໂຄງການການຂຸດຄົ້ນແຮ່ທາດ ແລະ ການຫັນປ່ຽນໂຄງການທົດລອງ ມາເປັນໂຄງການປົກກະຕິ ຕາມມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 133/ສພຊ, ລົງວັນທີ 1 ກໍລະກົດ 2024; ຄວາມຄືບໜ້າການຈັດຕັ້ງປະຕິບັດໂຄງການລົດເມ BRT ແລະ ການແກ້ໄຂປາກົດການຫຍໍ້ທໍ້ທີ່ມີຕໍ່ໂຄງການ; ການແກ້ໄຂເສດຖະກິດນອກລະບົບໃນໄລຍະຜ່ານມາ ແລະ ທິດທາງໃນຕໍ່ໜ້າ; ແຜນດັດແກ້ງົບປະມານແຫ່ງລັດປະຈຳປີ 2025; ຜົນການຕິດຕາມກວດກາໂຄງການພັດທະນາຈຳນວນໜຶ່ງ ທີ່ມີຜົນກະທົບຕໍ່ສັງຄົມ ແລະ ສິ່ງແວດລ້ອມ; ຕີລາຄາກົນໄກປະສານງານແລະການຈັດຕັ້ງປະຕິບັດບົດບັນທຶກຮ່ວມລະຫວ່າງຄະນະປະຈຳສະພາແຫ່ງ ກັບ ຄະນະລັດຖະບານ ລົງວັນທີ 14 ກຸມພາ 2025.

ບັນດາຜູ້ເຂົ້າຮ່ວມ ໄດ້ພ້ອມກັນຍົກສູງຄວາມຮັບຜິດຊອບໃນການປະກອບຄຳຄິດຄຳເຫັນເພື່ອສະເໜີວິທີແກ້ໄຂ, ປຶກສາຫາລືໃຫ້ມີຄວາມເປັນເອກະພາບ ແລະ ເຮັດໃຫ້ຜົນການປຶກສາຫາລື ແລະ ການຕົກລົງຂອງກອງປະຊຸມເທື່ອນີ້ ເປັນບ່ອນອີງໃຫ້ບັນດາອົງການຈັດຕັ້ງລັດທຸກຂັ້ນ ນຳໄປຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນສຳເລັດຢ່າງມີປະສິດທິພາບສູງຂຶ້ນເລື້ອຍໆ, ປະກອບສ່ວນນຳເອົາປະເທດເຮົາກ້າວຂຶ້ນຢ່າງໜັກແໜ້ນ.

**(ນາງ ອາລິນ ສຸພົມມະປະດິດ)**



ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ | ເລກທີ.....172...../ປປທ
ນະຄອນຫຼວງວຽງຈັນ, ວັນທີ...24 ຕຸລາ 2025....

# ລັດຖະດຳລັດ

## ວ່າດ້ວຍການແຕ່ງຕັ້ງຄະນະກຳມະການເລືອກຕັ້ງລະດັບຊາດ ເພື່ອການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V

- ອີງຕາມ ມາດຕາ 68 ຂໍ້ 9 ຂອງລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບເລກທີ 77/ສພຊ, ລົງວັນທີ 20 ເດືອນມີນາ ປີ 2025;
- ອີງຕາມ ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 58/ສພຊ, ລົງວັນທີ 28 ມິຖຸນາ 2024;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 48/ຄປຈ, ລົງວັນທີ 7 ຕຸລາ 2025.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ແຕ່ງຕັ້ງຄະນະກຳມະການເລືອກຕັ້ງລະດັບຊາດ ເພື່ອການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ຊຶ່ງປະກອບດ້ວຍບັນດາທ່ານ ດັ່ງນີ້:

1. ທ່ານ ປອ. ໄຊສົມພອນ ພົມວິຫານ — ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ເປັນປະທານ;
2. ທ່ານ ປອ. ຄຳພັນ ພົມມະທັດ — ກຳມະການກົມການເມືອງສູນກາງພັກ, ປະທານຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ເປັນຮອງປະທານ;
3. ທ່ານ ພົນເອກ ວິໄລ ຫຼ້າຄຳຟອງ — ກຳມະການກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ ເປັນຮອງປະທານ;



4. ທ່ານ ນາງ ສີໃສ ລືເດດມູນສອນ — ກຳມະການກົມການເມືອງສູນກາງພັກ, ຫົວໜ້າຄະນະຈັດຕັ້ງສູນກາງພັກ ເປັນຮອງປະທານ;
5. ທ່ານ ປອ. ຄຳພັນ ເຜີຍຍະວົງ — ເລຂາທິການສູນກາງພັກ, ຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ ເປັນກຳມະການ;
6. ທ່ານ ປອ. ນາງ ສູນທອນ ໄຊຍະຈັກ — ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ ເປັນກຳມະການ;
7. ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ — ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ເປັນກຳມະການ;
8. ທ່ານ ຄຳໃບ ດຳລັດ — ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ເປັນກຳມະການ;
9. ທ່ານ ສົມມາດ ພົລເສນາ — ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ເປັນກຳມະການ;
10. ທ່ານ ພົນໂທ ສຸວອນ ເລືອງບຸນມີ — ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ເປັນກຳມະການ;
11. ທ່ານ ນາງ ສວນສະຫວັນ ວິຍະເກດ — ກຳມະການສູນກາງພັກ, ລັດຖະມົນຕີ ກະຊວງວັດທະນະທຳ ແລະ ການທ່ອງທ່ຽວ ເປັນກຳມະການ;
12. ທ່ານ ພົນໂທ ຄຳລຽງ ອຸທະໄກສອນ — ກຳມະການສູນກາງພັກ, ລັດຖະມົນຕີ ກະຊວງປ້ອງກັນປະເທດ ເປັນກຳມະການ;
13. ທ່ານ ປອ. ບົວຄົງ ນາມມະວົງ — ກຳມະການສູນກາງພັກ, ລັດຖະມົນຕີ ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເປັນກຳມະການ;
14. ທ່ານ ສັນຕິພາບ ພົມວິຫານ — ກຳມະການສູນກາງພັກ, ລັດຖະມົນຕີ ກະຊວງການເງິນ ເປັນກຳມະການ;
15. ທ່ານ ເລັດ ໄຊຍະພອນ — ກຳມະການສູນກາງພັກ, ປະທານສູນກາງສະຫະພັນກຳມະບານລາວ ເປັນກຳມະການ;
16. ທ່ານ ນາງ ອາລີ ວົງໜໍ່ບຸນທຳ — ກຳມະການສູນກາງພັກ, ປະທານສູນກາງສະຫະພັນແມ່ຍິງລາວ ເປັນກຳມະການ;
17. ທ່ານ ດຣ. ນາງ ອິນລາວັນ ແກ້ວບຸນພັນ — ກຳມະການສູນກາງພັກ, ຮອງປະທານສູນກາງແນວລາວສ້າງຊາດ ເປັນກຳມະການ;
18. ທ່ານ ນາງ ອຳໄພວອນ ລ້ອມບຸນແພງ — ກຳມະການສຳຮອງສູນກາງພັກ, ເລຂາທິການສະພາແຫ່ງຊາດ ເປັນກຳມະການ;
19. ທ່ານ ພົນໂທ ແສງນວນ ໄຊຍະລາດ — ປະທານສະຫະພັນນັກຮົບເກົ່າແຫ່ງຊາດລາວ ເປັນກຳມະການ;
20. ທ່ານ ສຸບັນ ສະວະບຸດ — ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ເປັນກຳມະການ;



21. ທ່ານ ທອງລີ ສີສຸລິດ — ເລຂາຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ເປັນກຳມະການ.

**ມາດຕາ 2** ແຕ່ງຕັ້ງຄະນະປະຈຳການ ຊຶ່ງປະກອບດ້ວຍບັນດາທ່ານ ດັ່ງນີ້:

1. ທ່ານ ປອ. ໄຊສົມພອນ ພົມວິຫານ — ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ເປັນຫົວໜ້າ;
2. ທ່ານ ປອ. ຄຳພັນ ພົມມະທັດ — ກຳມະການກົມການເມືອງສູນກາງພັກ, ປະທານຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ເປັນຮອງຫົວໜ້າ;
3. ທ່ານ ພົນເອກ ວິໄລ ຫຼ້າຄຳຟອງ — ກຳມະການກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ ເປັນຮອງຫົວໜ້າ;
4. ທ່ານ ນາງ ສີໃສ ລືເດດມູນສອນ — ກຳມະການກົມການເມືອງສູນກາງພັກ, ຫົວໜ້າຄະນະຈັດຕັ້ງສູນກາງພັກ ເປັນຮອງຫົວໜ້າ;
5. ທ່ານ ປອ. ນາງ ສູນທອນ ໄຊຍະຈັກ — ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ ເປັນຜູ້ປະຈຳການ;
6. ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ — ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ເປັນກຳມະການ;
7. ທ່ານ ຄຳໃບ ດຳລັດ — ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ເປັນກຳມະການ;
8. ທ່ານ ສົມມາດ ພົລເສນາ — ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ເປັນກຳມະການ;
9. ທ່ານ ພົນໂທ ສຸວອນ ເລືອງບຸນມີ — ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ເປັນກຳມະການ;
10. ທ່ານ ສັນຕິພາບ ພົມວິຫານ — ກຳມະການສູນກາງພັກ, ລັດຖະມົນຕີ ກະຊວງການເງິນ ເປັນກຳມະການ.

**ມາດຕາ 3** ຄະນະກຳມະການເລືອກຕັ້ງລະດັບຊາດ ມີສິດ ແລະ ໜ້າທີ່ ດັ່ງນີ້:

ນອກຈາກປະຕິບັດຕາມມາດຕາ 27 ຂອງ ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ, ຄະນະກຳມະການເລືອກຕັ້ງລະດັບຊາດ ຍັງມີສິດ ແລະ ໜ້າທີ່ ດັ່ງນີ້:

1. ນຳພາ-ຊີ້ນຳ ວຽກງານທຸກດ້ານ ໃຫ້ແກ່ ການກະກຽມກ່ອນການເລືອກຕັ້ງ, ການດຳເນີນ ແລະ ການສະຫຼຸບຜົນສຳເລັດຂອງການເລືອກຕັ້ງ;
2. ແຕ່ງຕັ້ງອະນຸກຳມະການຕ່າງໆ ເພື່ອກະກຽມ ແລະ ດຳເນີນການເລືອກຕັ້ງ;



3. ຊີ້ນຳຄະນະກຳມະການເລືອກຕັ້ງລະດັບທ້ອງຖິ່ນ.

**ມາດຕາ 4** ຄະນະປະຈຳສະພາແຫ່ງຊາດ, ລັດຖະບານ, ຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ອົງການປົກຄອງທ້ອງຖິ່ນ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ທ່ານທີ່ໄດ້ຮັບການແຕ່ງຕັ້ງ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

**ມາດຕາ 5** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ທອງລຸນ ສີສຸລິດ



# ໝາກກ້ວຍຊ່ວຍປ້ອງກັນພະຍາດ

# ຮຽບຮຽງໂດຍ: ດອກຫຍ້າ

## ສຸກສະບາຍຫາຍໂຣດ



**ພະຍາດເລືອດຈາງ:** ໝາກກ້ວຍເປັນໝາກໄມ້ທີ່ມີທາດເຫຼັກຫຼາຍ ທາດເຫຼັກນີ້ຈະໄປຊ່ວຍກະຕຸ້ນການຜະລິດເຮໂມໂກລບິນໃນເມັດເລືອດ ຊ່ວຍໃຫ້ຄົນທີ່ເປັນພະຍາດເລືອດຈາງກັບມາແຂງແຮງຄືເກົ່າ.

**ພະຍາດຄວາມດັນເລືອດສູງ:** ໝາກກ້ວຍມີໂພແທັກຊຽມຫຼາຍທີ່ສຸດ ຈຶ່ງຫຼຸດຄວາມດັນເລືອດໄດ້ດີຫຼາຍ ອົງການອາຫານຂອງສະຫະລັດ ໄດ້ໂຄສະນາໃຫ້ປະຊາຊົນທີ່ເປັນພະຍາດຄວາມດັນເລືອດທັງຫຼາຍກິນໝາກກ້ວຍໃຫ້ຫຼາຍໆ.

**ອາການຖ່າຍຍາກ:** ເສັ້ນໃຍອາຫານຈາກໝາກກ້ວຍຈະເປັນຕົວຊ່ວຍໃນການຂັບຖ່າຍ.

**ພະຍາດຊຶມເສົ້າ:** ອາການຊຶມເສົ້າມັກເກີດຈາກສານເຄມີໃນສະໝອງບໍ່ສົມດຸນ ແຕ່ຈາກການວິໄຈພົບວ່າ ໝາກກ້ວຍມີໂປຣຕີນຊື່ໄທຣໂພໂຕແຟນ ທີ່ຈະກະຕຸ້ນໃຫ້ສະໝອງຫຼັ່ງຮໍໂມນໂຣໂທນິນ ທີ່ຊ່ວຍໃຫ້ຮູ້ສຶກຜ່ອຍຄາຍອອກມາ.

**ອາການເມົາຄ້າງ:** ໝາກກ້ວຍປັ່ນກັບນົມ ແລະ ນໍ້າເຜິ້ງຄືຢາແກ້ເມົາໄດ້ດີ.

**ອາການທ້ອງຮ້ອງ:** ໝາກກ້ວຍມີສານຫຼຸດກົດຕາມທຳມະຊາດ ຖ້າຄົນທີ່ເປັນອາການທ້ອງຮ້ອງເພາະມີກົດເກີນໃນກະເພາະ ກິນໝາກກ້ວຍມື້ລະໜ່ວຍຈະຮູ້ສຶກດີຂຶ້ນ.

**ລຳໄສ້ເປັນບາດແຜ:** ເພາະເນື້ອທີ່ນຸ້ມຂອງມັນບໍ່ລະຄາຍເຄືອງຕໍ່ກະເພາະອາຫານ ແລະ ຍັງມີສັບພະຄຸນເຄືອບຜະໜັງລຳໄສ້ ແລະ ຊ່ວຍປິ່ນປົວບາດແຜໃຫ້ເຊົາໄດ້ໄວຂຶ້ນ.

ເສັ້ນເລືອດຝອຍແຕກ: ມີການວິໄຈວ່າການກິນໝາກກ້ວຍເປັນປະຈຳ ສາມາດຫຼຸດອັນຕະລາຍທີ່ເກີດຂຶ້ນກັບເສັ້ນເລືອດແຕກໄດ້ເຖິງ40%.

**ຂໍ້ມູນຈາກ:**
**www.laopost.com**






# ຍາມເຊົ້າຖອກ

**# ອຳມະຕະ ທິດສະ**

❊ ແສງອະລຸນຮຸ່ງເຊົ້າ
ສັກກຸນາມັນນີ
ພ້ອມພໍ່ສັງໂຄເຈົ້າ
ນໍ້າໝອກເຫີຍຢາດຍ້ອຍ

ວັນໃໝ່ວຽນມາ
ອອກຮັງໂຮຍຮ້ອງ
ຈອນມາບິນທະບາດ
ຄວັນກຸ້ມດັ່ງວິມານ

❊ ແຖວທົ່ງທາມບ່ອນບ້ານ
ຕອນອາລຸນເຮືອງຮອງ
ເຂົ້ານາຢືນຊັນຊີ້
ຮວງງໍເຕັມຕື່ມໂຕ້ນ

ແສນມ່ວນອອນຊອນ
ສ່ອງພູມພາຍພື້ນ
ຂຽວກະຈິຊອນຊໍ່
ແສນຊ້ອຍຊື່ນໃຈ

❊ ນົກນ້ອຍງອຍງ່າໄມ້
ມານໝູ່ແຝງທຳລາຍ
ຊາວນາເຮົາທັງຈົ້ນ
ເຂົ້າຂຽວງາມລື່ນລົ້ນ

ປະສົງໄລ່ມອນແມງ
ລັກກິນກັດເຂົ້າ
ຢືນຫົວຍຸ້ມຍ່າມ
ຝົນຟ້າສິ່ງແຮງ

❊ ວາໂຍໂຍນຍ່າວແຈ້ງ
ເຕີຍຕາວຕານລົມພັດ
ຍໍຍົມຍຸງຍາງໄມ້
ໄພສິນແສນມ່ວນແມ້ງ

ເຕີນປ່າວລະດູການ
ອ່ອນເອນນອຍເນີ້ງ
ໃບເຫຼືອງເລີຍຫຼົ່ນ
ເຂົາຊຸ້ມຄູ່ຂັນ

❊ ປູປາມັນສະເດີດດົ້ນ
ຄອງຝົນແຮງໂຮຍຮຳ
ຂາວຄໍ່ເຂັ້ງປາກົ້ງ
ຢ້ານແຕ່ໜີບໍ່ມື້ມ

ແຄມຮ່ອງນາໜອງ
ຊິອວ່າຍວັງເວີນກວ້າງ
ຊິລີ້ງຊອນຕ້ອນຫຼີ່
ໄຊສ້ອນບ່ອນຝາຍ ນັ້ນແລ້ວ!



## ຫົກຫາຍ ລະບາຍ

### (ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)

**# ສຽມທ້ຽນ**

❊ **ເສັດ**ສິ້ນລົງຢ່າງເປັນທາງການ ກອງປະຊຸມຍົກສູງຄຸນນະພາບທາງດ້ານເນື້ອໃນໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງຈັດຂຶ້ນວັນທີ 6-7 ຜ່ານມາ ທີ່ຫໍປະຊຸມແຫ່ງຊາດ ນະຄອນຫຼວງວຽງຈັນ ຫຼາຍບັນຫາຍົກຂຶ້ນ ຖາມຕອບກົງປະເດັນ ອະທິບາຍລາຍງານ ເພື່ອກຽມຄວາມພ້ອມ ທັງພ່າປັບປຸງແກ້ບາງປະເດັນຄາຂອດ ບໍ່ໃຫ້ຖງຂອດຄ້າງ ລຳເຮືອຍືດຍາວນັ້ນແລ້ວ!

❊ **ກອງ**ປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX ຈະໄຂຂຶ້ນຢ່າງເປັນທາງການ ໃນວັນທີ 10 ພະຈິກນີ້ ແລ້ວຈະສືບຕໍ່ຍາວໄປຫາ 21 ພະຈິກ ລວມ 10 ວັນ ທີ່ບັນດາທ່ານ ສສຊ ຜູ້ທາວທັບ ຈະບິນຄົ້ນເຈາະຈົ້ມ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດໃຫ້ແກ່ພໍ່ແມ່ປະຊາຊົນລາວບັນດາເຜົ່າ ຢ່າງເອົາຈິງເອົາຈັງທີ່ຫ້ອງປະຊຸມສະພາແຫ່ງຊາດ ຈາກນີ້ໄປ ບັນຍາກາດຄົງຄຶກຄື້ນ ສສຊ ກ່າວມີຄ່າເທັນ ຫຼາຍປະເດັນຊີນຳມາ ວ່າກັນໃຫ້ມັນແຈ້ງ ຕິດຕາມຟັງຄະແຫຼງເອົ້າ ຕົວແທນເຮົາຊີໄຂກ່າວ ບັນຫາໃດເຄືອງຂຸ່ນຂອງ ອາໂຫຼເອົ້າສົ່ງໄປ ທ່ານເອີຍ! (ສາຍດ່ວນສະພາ 156 ແລະ ອີເມວ nalao.156@gmail.com ໂມງລັດຖະການ.

### ຊວນຍິ້ມ

**# ພົ້ງລຶ່ງ**

## ເລື່ອງ: ຮອດສະຫວັນແລ້ວ

ຊາຍໄວກາງຄົນກຳລັງກັບຮອດເຮືອນຫຼັງຈາກທີ່ເຜົາເມຍທີ່ເສຍຊີວິດໄປ; ລາວຫຼຽວຂຶ້ນໄປເທິງທ້ອງຟ້າ ເຫັນຟ້າມືດຄຶ້ມຄ້າຍຄືຝົນຊິຕົກ ທັງຟ້າກໍ່ຮ້ອງສະນັ່ນຫວັ່ນໄຫວ ທັງເຫຼື້ອມແມບໆມາບໆທົ່ວທ້ອງຟ້າ, ລາວຈຶ່ງຖອນຫາຍໃຈ ພ້ອມທັງພຶມພໍາກັບໂຕເອງວ່າ: “ເມຍຂ້ອຍຄືຊິຮອດສະຫວັນແລ້ວ ແລະ ເບິ່ງແມ ທ້ອງຟ້າວຸ້ນວາຍປານຫຍັງ!!!”



### ສຸພາສິດ-ຄະຕິເຕືອນໃຈ

**# ດອກຫຍ້າ**

“ເຂົ້າບ້ານຕາລີ່ວ ໃຫ້ລີ່ວຕາຕາມ”

ລັດຖະສະພາຕ່າງປະເທດ

# D66 ຊະນະການເລືອກຕັ້ງ ສະພາຕ່ຳໂຮນລັງ

(Xinhua) - ພັກປະຊາທິປະໄຕ 66 (D66) ນຳໂດຍ ຣ໊ອບ ເຈັດເທນ (Rob Jetten) ໄດ້ຮັບໄຊຊະນະໃນການເລືອກຕັ້ງສະພາຜູ້ແທນລາສະດອນ ຫຼື ສະພາຕ່ຳ ໂຮນລັງ, ສະພາການເລືອກຕັ້ງ (Electoral Council - EC) ຂອງປະເທດ ຢືນຢັນເມື່ອວັນທີ 7 ພະຈິກ ຜ່ານມາ.

ວິມ ຄຸຍເຄນ (Wim Kuijken) ປະທານ EC ປະກາດ ຜົນການເລືອກຕັ້ງຂັ້ນສຸດທ້າຍໃນກອງປະຊຸມສາທາລະນະໂດຍລະບຸວ່າ D66 ໄດ້ຮັບຄະແນນສຽງຫຼາຍກວ່າຄູ່ແຂ່ງທີ່ໃກ້ຄຽງທີ່ສຸດ ຄືພັກເພື່ອເສລີພາບ (PVV) ທີ່ນຳໂດຍ ກຽດ ໄວລ໌ເດີສ໌ (Geert Wilders) ເຖິງ 29,668 ຄະແນນ, ທັງສອງພັກໄດ້ຮັບພັກລະ 26 ທີ່ນັ່ງ ໃນສະພາຕ່ຳ 150 ທີ່ນັ່ງ; ຜົນການເລືອກຕັ້ງຢືນຢັນວ່າ D66 ເປັນຜູ້ຊະນະໂດຍລວມ ອັນເຮັດໃຫ້ເຈັດເທນ ມີສິດເປັນຜູ້ນຳການເຈລະຈາເພື່ອສ້າງຕັ້ງລັດຖະບານປະສົມຊຸດໃໝ່ທີ່ຈະມາເຖິງ.

ຈາກ 27 ພັກການເມືອງທີ່ລົງແຂ່ງຂັນໃນການເລືອກຕັ້ງ, ມີ 15 ພັກ ໄດ້ຮັບຄະແນນສຽງພຽງພໍທີ່ຈະໄດ້ຮັບທີ່ນັ່ງໃນສະພາ; ຕໍ່ຈາກ D66 ແລະ PVV, ພັກປະຊາຊົນເພື່ອເສລີພາບແລະປະຊາທິປະໄຕ ໄດ້ 22 ທີ່ນັ່ງ, ພັນທະມິດພັກຝ່າຍຊ້າຍສີຂຽວ-ພັກແຮງງານ ໄດ້ 20 ທີ່ນັ່ງ ແລະ ພັກອຸທອນປະຊາທິປະໄຕຄຣິສຕຽນ ໄດ້ 18 ທີ່ນັ່ງ.

ຄຸຍເຄນ ກ່າວວ່າ ຜົນການເລືອກຕັ້ງເຊື່ອຖືໄດ້ ແລະ ບໍ່ພົບຄວາມຜິດປົກກະຕິໃດໆ.

ການເລືອກຕັ້ງຄັ້ງນີ້ ມີຂຶ້ນພາຍຫຼັງ PVV ຖອນຕົວອອກຈາກລັດຖະບານປະສົມເມື່ອເດືອນມິຖຸນາຜ່ານມາເນື່ອງຈາກຂໍ້ຂັດແຍ້ງເລື່ອງຄົນເຂົ້າເມືອງ, ເຮັດໃຫ້ຄະນະລັດຖະມົນຕີຂອງນາຍົກລັດຖະມົນຕີ ດິກ ຊູຟ (Dick Schoof) ລາອອກ ແລະປະຕິບັດໜ້າທີ່ຮັກສາການນັບແຕ່ນັ້ນມາ.




# ສະພາສິງກະໂປ ຜ່ານກົດໝາຍເພີ່ມໂທດ ຂ້ຽນສະແກມເມີ ແລະ ບັນຊີມ້າ




(Straitstimes) - ວັນທີ 4 ພະຈິກຜ່ານມາ, ລັດຖະສະພາສິງກະໂປ ໄດ້ຜ່ານຮ່າງກົດໝາຍອາຍາສະບັບປັບປຸງ ເພີ່ມການລົງໂທດຂ້ຽນຕີ (cane) ຕໍ່ຜູ້ກະທຳຜິດຄະດີສໍ້ໂກງທາງອອນລາຍ. ທັງນີ້, ຜູ້ເຮັດໜ້າທີ່ສໍ້ໂກງ (scammer) ໂດຍກົງຕ້ອງຮັບໂທດໂດຍການຖືກຂ້ຽນຕີດ້ວຍຫວາຍຢ່າງໜ້ອຍ 6 ບາດ ແລະ ອາດເພີ່ມສູງສຸດເຖິງ 24 ບາດ ຂຶ້ນກັບຄວາມຮຸນແຮງຂອງການກະທຳຜິດ; ຂະນະທີ່ຜູ້ລໍ້ລວງ, ຜູ້ຊັກຊວນ ລວມເຖິງຜູ້ໃຫ້ການສະໜັບສະໜູນ ເຊັ່ນ: ຮັບຈ້າງບັນຊີມ້າ (money mules - ຜູ້ຮັບໂອນເງິນຜິດກົດໝາຍ)ແລະໃຫ້ຂໍ້ມູນຊິມກາດຕ້ອງຮັບໂທດຖືກຂ້ຽນຕີຕາມຄຳຕັດສິນຂອງສານ ເຊິ່ງອາດສູງສຸດ 12 ບາດ.

ນາງ ຊິມ ແອນນ໌ (Sim Ann) ລັດຖະມົນຕີອາວຸໂສແຫ່ງລັດຝ່າຍກິດຈະການພາຍໃນ ກ່າວຕໍ່ລັດຖະສະພາວ່າ ການສໍ້ໂກງທາງອອນລາຍ ໄດ້ກາຍເປັນອາຊະຍາກຳເຊິ່ງພົບຫຼາຍທີ່ສຸດໃນສິງກະໂປ, ກວມເອົາ 60% ຂອງອາຊະຍາກຳທັງໝົດທີ່ມີການລາຍງານ ໂດຍລະຫວ່າງປີ 2020 ຫາ 6 ເດືອນຕົ້ນປີນີ້, ມີການລາຍງານຄະດີສໍ້ໂກງທາງອອນລາຍ ປະມານ 190,000 ກໍລະນີ, ມູນຄ່າຄວາມເສຍຫາຍປະມານ 3,700 ລ້ານໂດລາສິງກະໂປ (ປະມານ 2,863 ລ້ານໂດລາສະຫະລັດ).

ນອກຈາກນີ້, ຂໍ້ມູນຈາກຕຳຫຼວດສິງກະໂປ ລະບຸວ່າ ອາຊະຍາກຳການສໍ້ໂກງທາງອອນລາຍ ສ້າງຄວາມເສຍຫາຍຫຼາຍກວ່າ 187.1 ລ້ານໂດລາສິງກະໂປ ໃນລະຫວ່າງເດືອນກໍລະກົດ-ກັນຍາຜ່ານມາ ເຊິ່ງເຮັດໃຫ້ມູນຄ່າຄວາມເສຍຫາຍທັງໝົດຈາກອາຊະຍາກຳດັ່ງກ່າວ ນັບແຕ່ປີ 2020 ຫາເດືອນກັນຍາປີນີ້ ຢູ່ທີ່ຢ່າງໜ້ອຍ 3,880 ລ້ານໂດລາສິງ ກະໂປ.

ປັດຈຸບັນ, ກົດໝາຍຂອງສິງກະໂປໄດ້ກຳນົດໃຫ້ຜູ້ກະທຳຜິດໃນ 96 ຄະດີ ຕ້ອງຮັບໂທດຖືກຂ້ຽນຕີຕາມຄຳຕັດສິນຂອງສານ ແລະ ຜູ້ກະທຳຜິດໃນ 65 ກໍລະນີ ຕ້ອງຮັບໂທດຖືກຂ້ຽນຕີພາກບັງຄັບ.

ເຖິງວ່າມີການເພີ່ມໂທດຂ້ຽນຕີສຳລັບການສໍ້ໂກງທາງອອນລາຍ, ແຕ່ລັດຖະມົນຕີກ່າວວ່າ ການປັບປຸງກົດໝາຍເຮັດໃຫ້ພົບວ່າ ມີຄວາມຈຳເປັນຕ້ອງປັບປ່ຽນການລົງໂທດຂ້ຽນຕີສຳລັບການກະທຳຜິດອື່ນ ໂດຍຈະມີການຍົກເລີກສຳລັບການກະທຳຜິດ 8 ກໍລະນີ ເຊັ່ນ: ການກີດຂວາງການສັນຈອນຂອງລົດໄຟແລະເປັນອັນຕະລາຍຕໍ່ຄວາມປອດໄພຂອງຜູ້ໂດຍສານ ພາຍໃຕ້ກົດໝາຍທາງລົດໄຟ.

ລັດຖະບານສິງກະໂປ ເນັ້ນໜັກວ່າ, ການປັບປຸງກົດໝາຍນີ້ ບໍ່ໄດ້ເປັນການຫຼຸດຄວາມເຂັ້ມງວດໃນການຕໍ່ຕ້ານອາຊະຍາກຳ, ເນື່ອງຈາກອາຊະຍາກຳສ່ວນໃຫຍ່ທີ່ຮຸນແຮງເຊັ່ນ: ການກະທຳຜິດທາງເພດແລະຄວາມຮຸນແຮງ ຈະຍັງຄົງມີການລົງໂທດດ້ວຍການຂ້ຽນຕີຕໍ່ໄປ.






## ແຈ້ງການ
### ຂອງຄະນະເລຂາທິການສະພາແຫ່ງຊາດ

ອີງຕາມ ມາດຕາ 57 ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ສະບັບປັບປຸງປີ 2024 ກ່ຽວກັບການດຳເນີນກອງປະຊຸມທ້າຍສະໄໝ ຂອງສະພາແຫ່ງຊາດ ແລະ ອີງຕາມມະຕິຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX ສະບັບເລກທີ 309/ຄປຈ, ລົງວັນທີ 29 ຕຸລາ 2025.

ຄະນະເລຂາທິການສະພາແຫ່ງຊາດ ມີຄວາມຍິນດີ ແລະ ຂໍຖືເປັນກຽດແຈ້ງມາຍັງອົງການຈັດຕັ້ງພັກ, ລັດ ແລະ ພໍ່ແມ່ປະຊາຊົນລາວບັນດາເຜົ່າ ຊາບວ່າ: ກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX ຈະຈັດຂຶ້ນຢ່າງເປັນທາງການ ລະຫວ່າງວັນທີ 10-21 ພະຈິກ 2025 ທີ່ຫ້ອງປະຊຸມໃຫຍ່ສະພາແຫ່ງຊາດ, ນະຄອນຫຼວງວຽງຈັນ.

ດັ່ງນັ້ນ, ຄະນະເລຂາທິການສະພາແຫ່ງຊາດ ຈຶ່ງຂໍແຈ້ງມາເພື່ອຊາບດ້ວຍ.

ຜູ້ແທນປະຊາຊົນ PHOUTHEN PASAXON

# ເພື່ອສິດ ແລະ ຜົນປະໂຫຍດຂອງລູກຈ້າງ ໃນອົງການຈັດຕັ້ງຂອງຕ່າງປະເທດ

❖ ວິເສດ ສະແຫວງສຶກສາ

ໃນບົດນີ້ ຂໍສະເໜີຂ່າວຕົ້ນຕໍກ່ຽວກັບດຳລັດນາຍົກຈີນ ທີ່ອອກມາໃໝ່ໆໝາດໆ ເພື່ອຄຸ້ມຄອງພະນັກງານຈີນ ທີ່ເຮັດວຽກໃນສະຖານທູດ ກໍຄືສະຖານກົງສຸນໃຫຍ່ຂອງຕ່າງປະເທດ ຢູ່ພາຍໃນ ສປຈີນ. ຂ່າວບອກວ່າ ດຳລັດສະບັບດັ່ງກ່າວ ປະກອບດ້ວຍ 12 ມາດຕາ ແລະ ຈະເລີ່ມມີຜົນສັກສິດໃນວັນທີ 1 ມັງກອນ 2026, ເປົ້າໝາຍສຳຄັນ ກໍຄືເພື່ອເຮັດໃຫ້ການວ່າຈ້າງພະນັກງານຈີນງ່າຍຂຶ້ນສຳລັບສະຖານທູດ ແລະ ກົງສຸນໃຫຍ່ໆຂອງຕ່າງປະເທດ ທີ່ມີສຳນັກງານຕັ້ງຢູ່ໃນ ສປຈີນ; ພ້ອມດຽວກັນນັ້ນ, ດຳລັດຍັງໄດ້ກຳນົດມາດຕະການປ້ອງກັນສິດທິທາງກົດໝາຍ ແລະ ຜົນປະໂຫຍດຂອງພະນັກງານທີ່ເປັນຄົນຈີນອີກດ້ວຍ.

ພາຍໃຕ້ດຳລັດສະບັບນີ້, ສຳນັກງານ-ອົງການຂອງຕ່າງປະເທດ ທີ່ຕ້ອງການວ່າຈ້າງພະນັກງານທີ່ເປັນຄົນຈີນນັ້ນ ຕ້ອງອອກແຈ້ງການກ່ຽວກັບຂໍ້ມູນ, ກ່ຽວກັບຕຳແໜ່ງງານ ກໍຄືຂັ້ນຕອນຕ່າງໆຂອງການວ່າຈ້າງຜ່ານເຄືອຂ່າຍຖານຂໍ້ມູນຂອງກະຊວງການຕ່າງປະເທດຈີນ; ນອກຈາກນັ້ນ, ຍັງຕ້ອງໄດ້ເຊັນຂໍ້ຕົກລົງກ່ຽວກັບເນື້ອໃນການໃຊ້ບໍລິການພະນັກງານວ່າຈ້າງດັ່ງກ່າວ ກັບໜ່ວຍງານທີ່ທາງກະຊວງການຕ່າງປະເທດຈີນແຕ່ງຕັ້ງໃຫ້ຮັບຜິດຊອບວຽກນີ້; ໃນຂໍ້ຕົກລົງທີ່ເຊັນກັນນັ້ນ ຕ້ອງມີລາຍລະອຽດກ່ຽວກັບສິດແລະຜົນປະໂຫຍດຂອງພະນັກງານທີ່ເປັນຄົນຈີນ.

ໃນຍຸກທີ່ການພົວພັນຮ່ວມມືລະຫວ່າງປະເທດມີການຂະຫຍາຍຕົວນີ້, ປະເທດຕ່າງໆລ້ວນແຕ່ໄດ້ມີມາດຕະການທາງກົດໝາຍ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງພົນລະເມືອງຂອງຕົນ ທີ່ຖືກວ່າຈ້າງໃຫ້ເຮັດວຽກຢູ່ຕາມສຳນັກງານອົງການຂອງຕ່າງປະເທດໃນພາກລັດ ກໍຄືໃນພາກເອກະຊົນ ເຊັ່ນຕາມບໍລິສັດຕ່າງໆ.

ເມື່ອຫຼາຍປີຜ່ານມາ, ທາງການປະເທດກູບາ ກໍໄດ້ອອກລະບຽບການກຳນົດຄ່າແຮງງານຂັ້ນຕ່ຳສຸດໃນການວ່າຈ້າງພະນັກງານທີ່ເປັນຄົນກູບາ ເພື່ອເຂົ້າເຮັດວຽກຢູ່ຕາມອົງການ-ສຳນັກງານ ແລະ ບໍລິສັດຕ່າງໆຂອງຕ່າງປະເທດ; ມາດຕະການດັ່ງກ່າວ ເຮັດໜ້າທີ່ປ້ອງກັນບໍ່ໃຫ້ມີການຂູດຮີດແຮງງານ, ການຈຳແນກ ແລະ ອື່ນໆ ພ້ອມດຽວກັນນັ້ນ ກໍຍັງມີໜ້າທີ່ປົກປ້ອງສິດ ແລະ ຜົນປະໂຫຍດທາງກົດໝາຍ ຂອງສຳນັກງານອົງການຂອງຕ່າງປະເທດເອງອີກດ້ວຍ.

ຂໍປິດທ້າຍບົດນີ້ດ້ວຍຂ່າວກ່ຽວກັບບາງບັນຫາທີ່ນັກສຶກສາຕ່າງປະເທດພວມປະເຊີນຢູ່ໃນປັດຈຸບັນ ທີ່ບອກວ່າທາງການ ສ.ເກົາຫຼີ ໄດ້ເຮັດການສຳຫຼວດກ່ຽວກັບນັກສຶກສາຕ່າງປະເທດທັງໝົດ ແລະ ໄດ້ພົບວ່ານັກສຶກສາຕ່າງປະເທດຈຳນວນຫຼວງຫຼາຍ ຍັງອ່ອນດ້ານພາສາອັງກິດ ແລະ ພາສາເກົາຫຼີ ເພື່ອສືບຕໍ່ສຶກສາລະດັບປະລິນຍາ... ນັກສຶກສາຕ່າງປະເທດໃນ ສ.ເກົາຫຼີ ນັ້ນ ຈຳນວນໜຶ່ງໃຊ້ພາສາເກົາຫຼີເປັນຕົ້ນຕໍໃນການສຶກສາ ແລະ ອີກສ່ວນໜຶ່ງເລືອກຮຽນພາສາອັງກິດ. ການສຳຫຼວດໃນປີ 2024 ພົບວ່າ ຄວາມຮູ້ດ້ານພາສາເກົາຫຼີ ແລະ ອັງກິດ ທີ່ນັກສຶກສາຕ່າງປະເທດເສັງໄດ້ຄະແນນລະດັບ 4 ນັ້ນ ມີພຽງ 1 ສ່ວນ 3 ຂອງນັກສຶກສາທັງໝົດ, ຄະແນນລະດັບ 4 ນີ້ ແມ່ນຂັ້ນມາດຕະຖານຕ່ຳສຸດທີ່ມີຄວາມຈຳເປັນສຳລັບສືບຕໍ່ສຶກສາຂອງນັກສຶກສາຕ່າງປະເທດໃນ ສ.ເກົາຫຼີ; ຜູ້ມີຄວາມຮູ້ໃນຂັ້ນນີ້ ສາມາດອ່ານ-ເຂົ້າໃຈໜັງສືພິມ, ບົດຄວາມ ແລະ ບົດຮຽນຂັ້ນມາດຕະຖານ. ເລື່ອງນີ້ ນັກສຶກສາລາວທີ່ຈະໄປຮຽນຢູ່ ສ.ເກົາຫຼີ ຄວນປັບປຸງຄວາມສາມາດດ້ານພາສາທີ່ຕົນຈະນຳໃຊ້ເຂົ້າໃນການຮ່ຳຮຽນ ເພື່ອໃຫ້ໄດ້ຮັບຄວາມຮູ້ສູງສຸດ ບໍ່ແມ່ນພຽງແຕ່ໃຫ້ໄດ້ຄະແນນອະນຸໂລມ, ເພາະຖ້າບໍ່ເກັ່ງພາສາທີ່ຈຳເປັນແລ້ວ ກໍຈະບໍ່ເຂົ້າໃຈເນື້ອໃນການສອນການຮຽນໄດ້ຢ່າງເຕັມປ່ຽມ.



# ສົ່ງໃຫ້ພະເຈົ້າ

*#ບ່າວກະບື*

**ພໍ່:** "ຂອບໃຈຫຼາຍໆທີ່ທ່ານໝໍໄດ້ຊ່ວຍຊີວິດລູກຊາຍເຮົາໄວ້"

**ທ່ານໝໍ:** "ພະເຈົ້າພຸ້ນແຫຼະ ເປັນຜູ້ຊ່ວຍຊີວິດລູກເຈົ້າໄວ້"

**ພໍ່:** "ແນວໃດກໍ່ຢ່າ... ກໍ່ຕ້ອງຂໍຂອບໃຈທ່ານ"

**ທ່ານໝໍ:** "ຊັ້ນ... ຄ່າປິ່ນປົວເດລະ?"

**ພໍ່:** "ຂ້ອຍຊິສົ່ງໃຫ້ພະເຈົ້າເອງດອກ".

# To God

***#BAOKBU***

**Father:** "Thank you very much, doctor for saving the life of my son"

**Doctor:** "It was the God who saved you son"

**Fathe:** "However, thank you"

**Docto:** "What about my fees?"

**Father:** "I will send them to God".




● ໂດຍ : ພູຜາ

## ຍົກສູງ...

(ຕໍ່ຈາກໜ້າ 3)

ແລະ ແກ້ໄຂຄຳສະເໜີ ແລະ ຄຳຮ້ອງຂໍຄວາມເປັນທຳ ທີ່ພົວພັນກັບຄວາມຮັບຜິດຊອບຂອງລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນ; ກົນໄກການປະສານງານໃນການແກ້ໄຂຄຳຮ້ອງຂໍຄວາມເປັນທຳ ທີ່ພົວພັນກັບຄວາມຮັບຜິດຊອບຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຢູ່ທ້ອງຖິ່ນຕົນຄື: ນະຄອນຫຼວງວຽງຈັນ, ແຂວງຫຼວງພະບາງ ແລະ ແຂວງຈຳປາສັກ.

ຜູ້ແທນກອງປະຊຸມ ໄດ້ສຸມສະຕິປັນຍາເຂົ້າໃນການຄົ້ນຄວ້າ, ປະກອບຄຳເຫັນຢ່າງມີຈຸດສຸມ ເພື່ອເປັນພື້ນຖານໃຫ້ກຳມາທິການຍຸຕິທຳ ນຳໄປຄົ້ນຄວ້າສັງລວມເປັນບົດປະກອບຄຳເຫັນໃຫ້ຄະນະປະຈຳສະພາແຫ່ງຊາດ ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX ກໍຄືເປັນບ່ອນອີງໃຫ້ແກ່ການປັບປຸງກົນໄກການປະສານງານໃນການແກ້ໄຂຄຳຮ້ອງຂໍຄວາມເປັນທຳ ລະຫວ່າງກຳມາທິການຍຸຕິທຳແລະສະພາປະຊາຊົນຂັ້ນແຂວງ ກັບ ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ກະຊວງຍຸຕິທຳ, ກະຊວງປ້ອງກັນຄວາມສະຫງົບ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນ.

**(ນາງ ກຸກກິກ ບຸດດາໄຊ)**

ທະນາຄານພັດທະນາລາວ
LDB Bank

**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ປອ. ພົດສະໄໝ ບຸນວິໄລ

**ຄະນະບັນນາທິການ**
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ

**ຮູບພາບປະກອບ**
ທ່ານ ສອນສັກ ວັນວິໄຊ